ວາລະສານ

# ການຄ້າ ລາວ

ກະຊວງອຸດສາຫະກຳ ແລະ ການຄ້າ - ກົມແຜນການ ແລະ ການຮ່ວມມື

ສະບັບທີ 7 - ເດືອນ ກໍລະກົດ 2012





# ສາລະບານ

ຄະນະຮັບຜິດຊອບ

ຜູ້ຊີ້ນຳລວມ: ທ່ານ ນາງ ເຂັມມະນີ ພົນເສນາ

ທີ່ປຶກສາ: ທ່ານ ສີລີສຳພັນ ວໍຣະຈິດ

ບັນນາທິການ: ທ່ານ ພູວຽງ ພົງສາ

ຮັບຜິດຊອບດ້ານເນື້ອໃນ: ຕົວແທນບັນດາ
ກົມໃນກະຊວງ ແລະ ກະຊວງທີ່ກ່ຽວຂ້ອງ

ຈັດພິມ: ໜ່ວຍງານຈັດຕັ້ງປະຕິບັດໂຄງການ

ໜ້າ 4
ການຮັບຮອງບົດວິໄຈການເຊື່ອມໂຍງເຂົ້າສາກົນດ້ານການຄ້າ DTIS ສປປ ລາວ ສະບັບປັບປຸງ

ໜ້າ 6
ຫຼັກການຄວາມໂປ່ງໃສຂອງ WTO ແລະ ພັນທະຂອງສປປ ລາວ

ໜ້າ 8
ບາດກ້າວ ຂອງການຜັນຂະຫຍາຍ ຍຸດທະສາດການອຳນວຍຄວາມສະດວກ ທາງດ້ານການຄ້າຂອງ ສປປ ລາວ ໄລຍະປີ 2011-2015

ໜ້າ 10
ກອງປະຊຸມສຳມະນາ ຫົວຂໍ້ "ການຄ້າຕ່າງປະເທດ ແລະ ການສ້າງຄວາມນາມາດໃນການແຂ່ງຂັນຫລັກສູດ Advance"

ໜ້າ 11
ບົດບາດ ແລະ ຄວາມສຳຄັນ ໃນການຄຸ້ມຄອງທຸລະກິດການຄ້າ (SME) ໃນເງື່ອນໄຂການເຊື່ອມໂຍງເສດຖະກິດກັບສາກົນ

ໜ້າ 13
ມາດຕະຖານທັກສະຄວາມສາມາດໃນການສ້າງປະຊາຄົມອາຊຽນ

ໜ້າ 16
ການປະເມີນຜົນກະທົບ ຂອງລະບຽບກົດໝາຍ ຕໍ່ການດຳເນີນທຸລະກິດ Regulatory Impact Assessment RIA

ໜ້າ 18
ການຜະລິດເສັ້ນໄໝແບບຍືນຍົງ ໃນ ສປປ ລາວ

ໜ້າ 19
ດັດສະນີຂອງການຕິດຕາມ ແລະ ການບໍລິຫານໂຄງການ (TPSDSG)

**ເຖິງ ທ່ານຜູ້ອ່ານ,**

ກ່ອນອື່ນ ຂໍຕ້ອນຮັບທ່ານຜູ້ອ່ານເຂົ້າສູ່

## ວາລະສານການຄ້າລາວ

ສະບັບທີ 7 ປະຈຳເດືອນ ກໍລະກົດ 2012.

ວາລະສານສະບັບທີ 7 ນີ້ ຈະໄດ້ນຳສະເໜີຂໍ້ມູນຂ່າວສານວຽກງານດ້ານການຄ້າແກ່ບັນດາທ່ານກ່ຽວກັບບັນດາກິດຈະກຳໂຄງການທີ່ມີຄວາມຄືບໜ້າຂອງບັນດາໂຄງການທີ່ຕິດພັນກັບວຽກງານການພັດທະນາການຄ້າ ແລະ ພາກທຸລະກິດໃນ ສປປ ລາວ ເຊິ່ງໃນນັ້ນລວມມີຫົວຂໍ້ທີ່ສຳຄັນຄື: ຫຼັກການຄວາມໂປ່ງໃສຂອງ WTO ແລະ ພັນທະຂອງ ສປປ ລາວ, ບາດກ້າວຂອງການຜັນຂະຫຍາຍຍຸດທະສາດການອຳນວຍຄວາມສະດວກທາງດ້ານການຄ້າຂອງສປປ ລາວ ໄລຍະປີ 2011-2015, ບົດບາດ ແລະ ຄວາມສຳຄັນໃນການຄຸ້ມຄອງທຸລະກິດການຄ້າ (SME) ໃນເງື່ອນໄຂການເຊື່ອມໂຍງເສດຖະກິດກັບສາກົນ ແລະ ໂຄງການຜະລິດເສັ້ນໄໝແບບຍືນຍົງ ໃນ ສປປ ລາວ ກໍ່ຄືການຮັບຮອງບົດວິໄຈ ການເຊື່ອມໂຍງເຂົ້າສາກົນດ້ານການຄ້າ ສະບັບປັບປຸງ 2012.

ສຸດທ້າຍນີ້, ທີມງານບັນນາທິການວາລະສານການຄ້າລາວຂໍສະແດງຄວາມຂອບໃຈ ມາຍັງທຸກພາກສ່ວນສຳລັບຄຳຕຳນິຕິຊົມທີ່ຜ່ານມາ ແລະ ຫວັງທີ່ມງານມີຄວາມຍິນດີທີ່ຈະໄດ້ຮັບຄຳຄິດເຫັນຈາກບັນດາທ່ານເພື່ອໃຊ້ເປັນແນວທາງໃນການພັດທະນາວາລະສານການຄ້າລາວໃຫ້ມີຄວາມສົມບູນດ້ານຮູບແບບກໍ່ຄືເນື້ອໃນໃຫ້ດີຂຶ້ນເລື້ອຍໆ.

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມແຜນການ ແລະ ການຮ່ວມມື

ຖະໜົນໂພນໄຊ, ຕູ້ ປ.ນ 4107,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ/ແຟັກ: (856 21) 413916, 453982
ອີເມລ: info@laosaft.org
ເວັບໄຊ: www.laosaft.org
ສະໜັບສະໜູນໂດຍ: ໂຄງການ EIF

# ການຮັບຮອງບົດວິໄຈການເຊື່ອມໂຍງເຂົ້າສາກົນດ້ານການຄ້າ ສປປ ລາວ ສະບັບປັບປຸງ

ໂດຍ: ພະແນກການຊ່ວຍເຫຼືອຂອງຕ່າງປະເທດ, ກົມແຜນການ ແລະ ການຮ່ວມມື




*ພະນະທ່ານ ເຂັມມະນີ ພົນເສນາ ກ່າວໃນກອງປະຊຸມຮັບຮອງບົດວິໄຈ DTIS 2012*

ພາກລັດ, ເອກະຊົນ ແລະ ບັນດາຄູ່ຮ່ວມພັດທະນາໄດ້ຮ່ວມກັນປຶກສາຫາລື ແລະ ຮັບຮອງເອົາບົດວິໄຈການເຊື່ອມໂຍງເຂົ້າສາກົນ ດ້ານການຄ້າ ສະບັບປັບປຸງ (DTIS) ພ້ອມທັງແຜນປະຕິບັດງານຂອງບົດວິໄຈດັ່ງກ່າວໃນວັນທີ 15 ພຶດສະພາ 2012.

ບົດວິໄຈ DTIS ເປັນພື້ນຖານດ້ານການຄົ້ນຄ້ວາ ແລະ ວິໄຈໃຫ້ແກ່ ການກຳນົດບັນດານະໂຍບາຍອັນຈຳເປັນ ແລະ ສ້າງກິດຈະກຳການຊ່ວຍເຫລືອດ້ານການຄ້າ (TRTA)/ມາດຕະການ ການເສີມສ້າງຄວາມເຂັ້ມແຂງ. ບົດວິໄຈ DTIS ຂອງ ສປປ ລາວ ສະບັບທຳອິດ ໄດ້ຮັບການສ້າງຂຶ້ນໃນປີ2006ພາຍໃຕ້ການເປັນເຈົ້າການຂອງທະນາຄານໂລກ, ແລະ ບົດຮຽນທີ່ຖອດຖອນໄດ້ໃນສະບັບດັ່ງກ່າວ ໄດ້ກາຍເປັນພື້ນຖານອັນດີໃຫ້ກັບການສ້າງບົດວິໄຈສະບັບປັບປຸງໃນປະຈຸບັນນີ້

ລັດຖະບານແຫ່ງ ສປປ ລາວ, ໂດຍສະເພາະກໍ່ແມ່ນກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ເປັນເຈົ້າການໃນການນຳພາຂະບວນການຮ່າງບົດວິໄຈຄັ້ງນີ້. ໂດຍໄດ້ຕັດສິນໃຈເປັນເຈົ້າການເອງ ແລະ ມອບໝາຍໃຫ້ໜ່ວຍງານຈັດຕັ້ງປະຕິບັດໂຄງການ (NIU) ເປັນຜູ້ ວາງແຜນແລະ ຄຸ້ມຄອງຂະບວນການໂດຍກົງ. ລັດຖະມົນຕີຊ່ວຍວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ຮ່ວມກັບລັດຖະມົນຕີຊ່ວຍວ່າການ ກະຊວງແຜນການ ແລະ ການລົງທຶນ ໄດ້ເປັນປະທານຂອງຄະນະກຳມະການທົບທວນວຽກງານດັ່ງກ່າວ ແລະ ມີໜ້າທີ່ໃນການ ປະກອບຄຳຄິດຄຳເຫັນ ຕໍ່ກັບຮ່າງບົດວິໄຈ ກໍ່ຄືຂະບວນການຕ່າງໆ ພ້ອມທັງອຳນວຍຄວາມສະດວກ ແລະ ເປັນປະທານໃຫ້ກັບກອງປະຊຸມປຶກສາຫາລື ບົດວິໄຈ ໃນເຂດນະຄອນຫຼວງວຽງຈັນ ແລະ ໃນຕ່າງແຂວງ.

ບົດວິໄຈສະບັບນີ້ ປະກອບມີ 5 ຂົງເຂດໃຫຍ່ຄື:

1. ທົບທວນ ແລະ ວິໄຈ ສະພາບເສດຖະກິດ ແລະ ການສົ່ງອອກຂອງປະເທດ.
2. ທົບທວນ ແລະ ຕີລາຄາສະພາບແວດລ້ອມ ດ້ານເສດຖະກິດມະຫາພາກ ແລະ ການລົງທຶນຂອງປະເທດ.
3. ວິເຄາະສະພາບແວດລ້ອມດ້ານນະໂຍບາຍການຄ້າຕ່າງປະເທດ ໂດຍສະເພາະແມ່ນ ການກຳນົດ ບັນດາສິ່ງກີດຂວາງທີ່ມີຕໍ່ການສົ່ງອອກ ສູ່ຕະຫຼາດສາກົນ.
4. ສຸມໃສ່ 5 ຂະແໜງທຸລະກິດທີ່ມີການຈ້າງງານສູງເຊິ່ງພາກທຸລະກິດສາມາດປະກອບສ່ວນເຂົ້າໃນການເພີ່ມຜົນຜະລິດ ແລະ ການສົ່ງອອກ ທັງເປັນໂອກາດທີ່ດີໃຫ້ກັບປະຊົນຜູ້ທີ່ທຸກຍາກທີ່ຈະໄດ້ຮັບຜົນປະໂຫຍດສູງສຸດ.
5. ເປັນການສັງລວມບັນດາບູລິມະສິດໃນການແກ້ໄຂນະໂຍບາຍ ແລະ ຄວາມຕ້ອງການໃນການສ້າງຄວາມເຂັ້ມແຂງໃນລະດັບຂະແໜງທຸລະກິດ ເພື່ອຍາດແຍ່ງເອົາບັນດາກາລະໂອກາດ ທີ່ກຳນົດໄວ້ໃນແຜນຍຸດທະສາດ.

ຫົວຂໍ້ອັນໜຶ່ງທີ່ສຳຄັນ ທີ່ເປັນພື້ນຖານໃຫ້ການຮັບຮອງບົດວິໄຈ 2012 ທັງໝົດກໍ່ແມ່ນຄວາມຈຳເປັນເພື່ອເພີ່ມທະວີການສົ່ງອອກທີ່ຫຼາກຫຼາຍໃຫ້ກັບບັນດາຂະແໜງການ ແລະ ສ້າງຜົນກະທົບທາງສັງຄົມໃຫ້ສູງ ເພື່ອຮັບປະກັນວ່າວຽກງານການຄ້າຈະມີຜົນກະທົບສູງສຸດຕໍ່ກັບການປັບປຸງຊີວິດການເປັນຢູ່ຂອງປະຊາຊົນຜູ້ທີ່ທຸກຍາກ. ນອກຈາກນັ້ນ, ຢູ່ໃນຂະແໜງການ ແລະ ລະດັບໂຄງການ, ໄດ້ກຳນົດບັນດາມາດຕະການອັນສະເພາະໃນບົດວິໄຈ DTIS ກໍ່ແມ່ນເພື່ອເພີ່ມທະວີຜົນກະທົບທາງບວກໂດຍກົງຂອງການຊ່ວຍເຫຼືອດ້ານການຄ້າ ຕໍ່ກັບບັນດາບຸກຄົນທີ່ທຸກຍາກ ແລະ ຜູ້ດ້ອຍໂອກາດ ແລະ ການຮັກສາສິ່ງແວດລ້ອມ.

ແຜນພັດທະນາທີ່ຕິດພັນກັບການຄ້າ (Action Matrix) ສຳລັບ ບົດວິໄຈ DTIS ສະບັບປັບປຸງໄດ້ຮວບຮວມໄວ້ໃນແຜນງານ ສຳລັບການພັດທະນາການຄ້າ ແລະ ພາກທຸລະກິດ ຂອງ ສປປ ລາວ. ນີ້ຈະກາຍເປັນ ແຜນງານສຳລັບໜ່ວຍງານພັດທະນາການຄ້າ ແລະ ພາກທຸລະກິດພາຍໃຕ້ຂະບວນການກອງປະຊຸມໂຕະມົນ. ຍ້ອນແນວນັ້ນ, ບົດວິໄຈນີ້ຈະກາຍເປັນເອກະສານທີ່ມີຊີວິດຊີວາທີ່ມີບັນດາບູລິມະສິດແຜນພັດທະນາທີ່ຕິດພັນກັບການຄ້າ

ມີຄວາມກ່ຽວພັນໂດຍກົງກັບເປົ້າໝາຍຂອງແຜນພັດທະນາເສດຖະກິດສັງຄົມໂດຍລວມ.

ແຜນງານພັດທະນາການຄ້າ ແລະ ພາກທຸລະກິດ ມີເປົ້າໝາຍເພື່ອບັນລຸການພັດທະນາການຄ້າ ແລະ ພາກທຸລະກິດທີ່ຍືນຍົງສຳລັບຫຼຸດຜ່ອນຄວາມທຸກຍາກ ແລະ ຫຼຸດພົ້ນຈາກສະຖານະພາບດ້ອຍພັດທະນາດ້ວຍສ້າງພື້ນຖານເສດຖະກິດທີ່ທັນສະໄໝ ແລະ ມີຄວາມຫຼາກຫຼາຍ ຜ່ານການປັບປຸງ 3 ຂົງເຂດຕົ້ນຕໍລຸ່ມນີ້:

1. ສ້າງສະພາບແວດລ້ອມ ເອື້ອອຳນວຍໃຫ້ແກ່ວຽກງານການຄ້າການລົງທຶນ ໂດຍຜ່ານການ:
   - ສົ່ງເສີມການເຊື່ອມໂຍງການຄ້າ (ຫຼັງການເຂົ້າເປັນສະມາຊິກອົງການການຄ້າໂລກ, ແລະ ການສ້າງປະຊາຄົມເສດຖະກິດອາຊຽນ)
   - ປັບປຸງສະພາບແວດລ້ອມການດຳເນີນທຸລະກິດ
   - ປັບປຸງການອຳນວຍຄວາມສະດວກດ້ານການຄ້າ
   - ສ້າງພື້ນຖານໂຄງລ່າງທີ່ໄດ້ຮັບຄຸນນະພາບ
2. ສົ່ງເສີມຄວາມສາມາດໃນການແຂ່ງຂັນ, ຄຸນນະພາບ ແລະ ຄຸນຄ່າຂອງຂະແໜງການທຸລະກິດກະສິກຳ, ການຜະລິດ ແລະ ການບໍລິການໂດຍຜ່ານການ:
   - ຈັດຕັ້ງປະຕິບັດມາດຕະການປັບປຸງຄຸນນະພາບ ແລະ ຜະລິດຕະພາບ ໃຫ້ແກ່ ວິສາຫະກິດຂະໜາດນ້ອຍ ແລະ ກາງ
   - ສະໜັບສະໜູນການປຶກສາຫາລືລະຫວ່າງພາກລັດ-ເອກະຊົນ ແລະ ຈັດຕັ້ງປະຕິບັດບັນດາມາດຕະການເພື່ອສະໜັບສະໜູນ ແກ່ບັນດາຂະແໜງການສະເພາະດັ່ງລຸ່ມ:
     - ທຸລະກິດກະສິກຳ
     - ການທ່ອງທ່ຽວ
     - ຫັດຖະກຳຕຳແຜ່ນ
     - ອຸດສາຫະກຳເຄື່ອງນຸ່ງຫົ່ມ
     - ອຸດສາຫະກຳປຸງແຕ່ງໄມ້
   - ສົ່ງເສີມບັນດາຂະແໜງການອຸດສາຫະກຳຍ່ອຍ ທີ່ຕິດພັນກັບຂະແໜງບໍ່ແຮ່ ແລະ ໄຟຟ້ານ້ຳຕົກ

3. ປັບປຸງຂອບການຄຸ້ມຄອງການຊ່ວຍເຫຼືອດ້ານການຄ້າຂອງລັດຖະບານ ເພື່ອເຊື່ອມສານວຽກງານພັດທະນາການຄ້າ ແລະ ພາກທຸລະກິດ ໂດຍຜ່ານການ:
   - ເຊື່ອມສານວຽກງານຄວາມທຸກຍາກ, ຄວາມສະເໝີພາບ ແລະ ສະພາບແວດລ້ອມເຂົ້າໃນວຽກງານການຄ້າ
   - ເສີມສ້າງຄວາມເຂັ້ມແຂງໃຫ້ອົງກອນ
   - ການພັດທະນາ ໜ່ວຍງານພັດທະນາຂະແໜງການການຄ້າ ແລະ ພາກທຸລະກິດ ແລະ ເຊື່ອມສານວຽກງານການຄ້າເຂົ້າໃນແຜນພັດທະນາແຫ່ງຊາດ
   - ການຄ້າ ແລະ ຂອບຄຸ້ມຄອງການຊ່ວຍເຫຼືອດ້ານການຄ້າ ແລະ ການຈັດຕັ້ງປະຕິບັດ
   - ການຕິດຕາມ ແລະ ປະເມີນຜົນ

ບົດວິໄຈ ການເຊື່ອມໂຍງເຂົ້າສາກົນດ້ານການຄ້າ ເປັນເອກະສານສຳຄັນ ໃຊ້ເປັນບ່ອນອີງສຳລັບປະເທດຄູ່ຮ່ວມພັດທະນາ, ອົງການຜູ້ໃຫ້ທຶນ ໃນການຊ່ວຍເຫຼືອດ້ານການຄ້າຂອງ ສປປ ລາວ ເຊິ່ງມັນຈະຊ່ວຍໃຫ້ຂໍ້ມູນພື້ນຖານໃນດ້ານການຄ້າ, ການລົງທຶນ ແລະ ການພັດທະນາທຸລະກິດໃນ ສປປ ລາວ, ລວມທັງບັນດາຂະແໜງການບູລິມະສິດຂອງລັດຖະບານ. ບົດວິໄຈສະບັບນີ້ຍັງຈະຊ່ວຍໃຫ້ສປປລາວໃນການເຊື່ອມສານວຽກງານການຄ້າເຂົ້າໃນບັນດາຍຸດທະສາດການພັດທະນາ ກໍຄືວຽກງານການເຊື່ອມໂຍງເຂົ້າເຖິງຕະຫຼາດສາກົນ ຂອງພາກສ່ວນເອກະຊົນຂອງ ສປປ ລາວໃນອະນາຄົດ.



# ຫຼັກການຄວາມໂປ່ງໃສຂອງ WTO ແລະ ພັນທະຂອງສປປ ລາວ

ໂດຍ: ພະແນກຮ່ວມມືເສດຖະກິດຫຼາຍຝ່າຍ, ກົມນະໂຍບາຍການຄ້າຕ່າງປະເທດ

## 1. ຫຼັກການຄວາມໂປ່ງໃສຂອງ WTO

ຄວາມໂປ່ງໃສ ແມ່ນໜຶ່ງໃນບັນດາຫຼັກການທີ່ສຳຄັນຂອງ ອົງການການຄ້າໂລກ (ອຄລ) ທີ່ກຳນົດວ່າ ທຸກລະບຽບການການຄ້າ ຂອງ ສະມາຊິກ ອຄລ ຕ້ອງແຈ້ງ ແລະ ເຜີຍແຜ່ຕໍ່ສາທາລະນະຊົນ ເພື່ອສິ່ງເສີມສ້າງຄວາມແນ່ນອນ ແລະ ຄວາມສະຖຽນລະພາບ ທາງດ້ານການຄ້າລະຫວ່າງປະເທດ. ດັ່ງນັ້ນ, ຈຶ່ງໄດ້ນຳເອົາຫຼັກການດັ່ງກ່າວມາປະຕິບັດຜ່ານທາງຂັ້ນຕອນ ການປຶກສາຫາລືໃນການສ້າງນິຕິກຳ ພ້ອມກັບການແຈ້ງ ແລະ ການເຜີຍແຜ່ ບັນດາກົດໝາຍທີ່ຮັບຮອງແລ້ວນັ້ນ ແລະ ລະບຽບການທີ່ກ່ຽວຂ້ອງກັບການຄ້າ.

ພັນທະຄວາມໂປ່ງໃສ ຖືກກຳນົດໄວ້ຢ່າງຈະແຈ້ງໃນມາດຕາ 10 ຂອງສັນຍາທົ່ວໄປວ່າດ້ວຍອັດຕາພາສີ ແລະ ການຄ້າ (GATT), ມາດຕາ 3 ຂອງ ສັນຍາທົ່ວໄປວ່າດ້ວຍ ການຄ້າ ດ້ານການບໍລິການ (GATS), ແລະ ມາດຕາ 63 ຂອງ ສັນຍາວ່າ ດ້ວຍການຄ້າທີ່ຕິດພັນສິດທິດ້ານຊັບສິນທາງປັນຍາ (TRIPS), ມາດຕາ 7 ແລະ ເອກະສານຊ້ອນທ້າຍ (ຂ) ສັນຍາວ່າ ດ້ວຍສຸຂານາໄມ ແລະ ສຸຂານາໄມພືດ (SPS), ມາດຕາ 3 ຂອງສັນຍາວ່າດ້ວຍການຄ້າທີ່ຕິດພັນກັບການລົງທຶນ (TRIM) ແລະ ສັນຍາອື່ນໆຂອງ WTO .

*ໃນມາດຕາ 10 ຂອງ ແກັດ (GATT) ໄດ້ກຳນົດຫຼັກການພື້ນຖານຊຶ່ງສະຫຼຸບໄດ້ໂດຍຫຍໍ້ ດັ່ງນີ້:*

1. ກົດໝາຍ, ລະບຽບການ, ຄຳຕັດສິນຂອງສານ ແລະ ລະບຽບການຄຸ້ມຄອງທາງດ້ານບໍລິຫານທີ່ນຳໃຊ້ທົ່ວໄປຊຶ່ງມີຜົນບັງຄັບໃຊ້ໃນບັນດາປະເທດສະມາຊິກຕ້ອງຖືກຈັດພິມເຜີຍແຜ່ໂດຍທັນທີ ເພື່ອເຮັດໃຫ້ລັດຖະບານ ແລະ ຊາວຄ້າຂາຍຂອງປະເທດກ່ຽວຂ້ອງມີຄວາມຄຸ້ນເຄີຍນຳເອກະສານເຫຼົ່ານັ້ນ;
2. ຄູ່ສັນຍາໃດໜຶ່ງ ຕ້ອງບໍ່ນຳໃຊ້ມາດຕະການທີ່ນຳໃຊ້ທົ່ວໄປຊຶ່ງມີຜົນລ່ວງໜ້າ, ກ່ອນການພິມເຜີຍແຜ່ຢ່າງເປັນທາງການກ່ຽວກັບມາດຕະການເຫຼົ່ານັ້ນ;
3. ຄູ່ສັນຍາໃດໜຶ່ງ ຕ້ອງຄຸ້ມຄອງບໍລິຫານກົດໝາຍ, ລະບຽບການ, ຂໍ້ຕົກລົງຕ່າງໆ ຂອງປະເທດຕົນໃນວິທີທາງທີ່ເປັນເອກະພາບ, ເປັນທຳ ແລະ ສົມເຫດສົມຜົນ;
4. ຄູ່ສັນຍາໃດໜຶ່ງຕ້ອງຮັກສາໄວ້ ຫຼື ຈັດຕັ້ງຂຶ້ນກ່ຽວກັບສານຍຸດຕິທຳ, ສານປົກຄອງ ຫຼື ຄະນະກຳມະການຕັດສິນດ້ານຕຸລາການ ຫຼື ກົນໄກທີ່ສາມາດປະຕິບັດໄດ້ໃຫ້ໄວເທົ່າທີ່ຈະໄວໄດ້ເພື່ອຈຸດປະສົງ ໃນການທົບທວນ ແລະ ການແກ້ໄຂຢ່າງທັນທີຕໍ່ກັບການກະທຳ ຫຼື ການປະຕິບັດທາງດ້ານການຄຸ້ມຄອງບໍລິຫານ.

## 2. ພັນທະຂອງສປປ ລາວ

ຫຼັກການຄວາມໂປ່ງໃສ ປະຈຸບັນ ຂອງ ສປປ ລາວ ໄດ້ລະບຸໄວ້ ໂດຍພື້ນຖານ ໃນ ລັດຖະບັນຍັດ ເລກທີ 02/ສປປ ວ່າດ້ວຍ "ການສ້າງນິຕິກຳ" ລົງວັນທີ 20/10/2003, ເຊິ່ງລັດຖະບັນຍັດດັ່ງກ່າວ ກຳນົດໃຫ້ມີການປຶກສາຫາລືແບບພື້ນຖານກັບບັນດາກະຊວງ ທີ່ກ່ຽວຂ້ອງແລະສາທາລະນະຊົນທົ່ວໄປໃນຂັ້ນຕອນການອອກກົດໝາຍໃໝ່ ແລະ ການປັບປຸງກົດໝາຍ. ນອກນັ້ນ, ລັດຖະບັນຍັດ ຍັງກຳນົດໃຫ້ມີການເຜີຍແຜ່ລະບຽບການ ແລະ ກົດໝາຍ ແລະ ຜ່ານສື່ມວນຊົນຕ່າງໆ.

ເຖິງຢ່າງໃດກໍຕາມ, ເພື່ອໃຫ້ສອດຄ່ອງກັບພັນທະຄວາມໂປ່ງໃສ ຂອງ ອຄລ, ສປປ ລາວ ຈຳເປັນຕ້ອງຍົກລະດັບຂັ້ນຕອນການປຶກສາຫາລືໃນການສ້າງນິຕິກຳ ແລະຄວາມສັກສິດໃນການພິມເຜີຍແຜ່ນິຕິກຳຂອງຕົນ. ດັ່ງນັ້ນ, ໃນປະຈຸບັນ ສປປ ລາວ ກຳລັງປັບປຸງ ລັດຖະບັນຍັດ ເລກທີ 02/ສປປ ໃຫ້ກາຍເປັນ ກົດໝາຍ ວ່າດ້ວຍ "ການສ້າງນິຕິກຳ", ເຊິ່ງຄາດວ່າຈະໄດ້ ຮັບການ ຮັບຮອງໂດຍສະພາແຫ່ງຊາດໃນປີ2012ນີ້.ກົດໝາຍໃໝ່ດັ່ງກ່າວຈະກຳນົດຂອບເຂດຄວາມຮຽກຮ້ອງຕ້ອງການທາງດ້ານຄວາມໂປ່ງໃສ ຫຼາຍຂຶ້ນ ໃນຂະບວນການ ສ້າງນິຕິກຳ ໂດຍສະເພາະ ກົດໝາຍ ສະບັບນີ້ ຈະອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດ ຕັ້ງທັງພາກລັດ ແລະ ເອກະຊົນ ປະກອບຄຳເຫັນຕໍ່ຮ່າງ ນິຕິກຳ ພາຍໃນຂອບເຂດເວລາ ແລະ ດ້ວຍວິທີການປຶກສາໃດໜຶ່ງ. ກົດໝາຍສະບັບນີ້ຍັງຈະຍົກລະດັບການເຜີຍແຜ່ນິຕິກຳຜ່ານຈົດໝາຍເຫດທາງລັດຖະການ.





*ການສະເຫຼີມສະຫຼອງຜົນສຳເລັດການເຈລະຈາສອງຝ່າຍໃນຂອບການເຂົ້າເປັນສະມາຊິກອົງການການຄ້າໂລກ ລະຫວ່າງ ສປປ ລາວ ແລະ ສະຫະພາບເອີລົບ*

ພ້ອມນັ້ນ, ລັດຖະບານ ແຫ່ງ ສປປ ລາວ ຍັງໄດ້ອອກດຳລັດ ເລກທີ 363 ວ່າດ້ວຍ "ການແຈ້ງການ ແລະ ສະໜອງຂໍ້ມູນທີ່ຕິດ ພັນກັບການຄ້າ" ລົງວັນ ທີ 19 ສິງຫາ 2010, ເຊິ່ງກຳນົດ ການສ້າງຕັ້ງໜ່ວຍແຈ້ງຂໍ້ມູນດ້ານສຸຂານາໄມ ແລະ ສຸຂານາໄມພືດ (SPS) ພາຍໃຕ້ ກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ, ເພື່ອແຈ້ງ ປະເທດຄູ່ຄ້າ ອຄລ ອື່ນຊາບກ່ຽວກັບທຸກກົດໝາຍ, ລະບຽບການ, ນະໂຍບາຍ ແລະ ມາດຕະການທີ່ສະເໜີ ຫຼື ສ້າງໃໝ່ກໍຄືບັນຫາ SPS ແລະ TBT, ຊຶ່ງເປັນ ພັນທະ ຂອງທຸກສະມາຊິກ ອຄລ. ດຳລັດນີ້ຍັງກຳນົດການສ້າງຕັ້ງຈຸດສອບຖາມ ຂໍ້ມູນດ້ານສຸຂານາໄມ ແລະ ສຸຂານາໄມພືດ ແລະ ຈຸດສອບຖາມຂໍ້ມູນການຄ້າ ດ້ານການບໍລິການ ຢູ່ທີ່ ກະຊວງ ກະສິກຳ ແລະ ປ່າໄມ້, ກະຊວງສາທາລະນະສຸກ ແລະ ກະຊວງ ວິທະ ຍາສາດ ແລະ ເຕັກໂນໂລຊີ ຕາມລຳດັບເພື່ອສະໜອງຂໍ້ມູນ ທັງໝົດທີ່ກ່ຽວກັບຂົງເຂດດັ່ງກ່າວ ໃຫ້ກັບພາກເອກະຊົນ ແລະ ສາທາລະນະຊົນທົ່ວໄປ. ຈຸດສອບຖາມທີ່ຄ້າຍຄືກັນນັ້ນສຳລັບຂໍ້ມູນດ້ານການຄ້າດ້ານການບໍລິການ ແມ່ນໄດ້ຕັ້ງຂຶ້ນທີ່ ກະຊວງອຸດສາຫະກຳ ແລະ ການຄ້າ



# ບາດກ້າວຂອງການຜັນຂະຫຍາຍ ຍຸດທະສາດການອຳນວຍຄວາມສະດວກທາງດ້ານການຄ້າ ຂອງ ສປປ ລາວ ໄລຍະປີ 2011-2015.

ໂດຍ: ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ

ແຜນຍຸດທະສາດ ການອຳນວຍຄວາມສະດວກທາງດ້ານການຄ້າ ຂອງ ສປປ ລາວ ໄລຍະປີ 2011-2015 ປະສົບຜົນສຳເລັດແລະໄດ້ຖືກຮັບຮອງຢ່າງເປັນທາງການຈາກລັດຖະບານ ຕາມດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 213/ລບ, ລົງວັນທີ 18 ກໍລະກົດ 2011. ວັດຖຸປະສົງຕົ້ນຕໍ ຂອງການສ້າງແຜນຍຸດທະສາດດັ່ງກ່າວແມ່ນເພື່ອແນໃສ່ປັບປຸງສະພາບແວດລ້ອມທາງດ້ານການຄ້າ ໃຫ້ແທດເໝາະກັບວິວັດທະນາການຈາກການເຊື່ອມໂຍງເສດຖະກິດເຂົ້າພາກພື້ນ ແລະ ສາກົນ. ໂດຍເຮັດໃຫ້ຂັ້ນຕອນການຄ້າມີຄວາມກະທັດຮັດ, ງ່າຍດາຍ, ໂປ່ງໃສ, ສະດວກວ່ອງໄວ ແລະ ກົມກຽວກັນຢ່າງເປັນລະບົບ ແລະ ໄດ້ມາດຕະຖານສາກົນ. ສິ່ງສຳຄັນທີ່ສຸດແມ່ນເພື່ອຈັດຕັ້ງຜັນຂະຫຍາຍຜົນກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ, 04 ບຸກທະລຸ ໂດຍສະເພາະແມ່ນແຜນບຸກທະລຸ ເພື່ອແກ້ໄຂລະບອບລະບຽບທີ່ຍັງກີດໜ່ວງອັດຕັນການຂະຫຍາຍຕົວຂອງພາກທຸລະກິດ.

ນອກນີ້, ແຜນຍຸດທະສາດການອຳນວຍຄວາມສະດວກທາງດ້ານການຄ້າ ສະບັບດັ່ງກ່າວໄດ້ຖືກສ້າງຂຶ້ນເພື່ອເປັນບ່ອນອີງ ໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງ ໃນລະດັບສູນກາງ ແລະ ທ້ອງຖິ່ນ ທີ່ປິ່ນອ້ອມວຽກງານການນຳເຂົ້າ ແລະສົ່ງອອກ ໃຫ້ສາມາດປະຕິບັດໄປໃນທິດດຽວກັນ ເພື່ອແນໃສ່ ການຍົກລະດັບຂີດຄວາມສາມາດ ດ້ານການສົ່ງອອກ ແລະ ນຳເຂົ້າສິນຄ້າ ໂດຍເຮັດໃຫ້ຂັ້ນຕອນດ້ານການຄ້າມີຄວາມກະທັດຮັດ, ງ່າຍດາຍ, ໂປ່ງໃສ, ສະດວກວ່ອງໄວ ແລະ ກົມກຽວກັນຢ່າງເປັນລະບົບ, ຫຼຸດຜ່ອນບັນດາຂອດການອະນຸຍາດ ທີ່ຕິດພັນກັບການນຳເຂົ້າ ແລະ ສົ່ງອອກ ທີ່ສົ່ງຜົນກະທົບທາງກົງ ແລະ ທາງອ້ອມໃນການດຳເນີນທຸລະກິດ. ນອກຈາກນັ້ນ, ຍັງເປັນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງບັນດາປະເທດເວົ້າລວມ ແລະ ເວົ້າສະເພາະແມ່ນເຮັດໃຫ້ຊີວິດການປັນຢູ່ ຂອງປະຊາຊົນບັນດາເຜົ່າ ໃຫ້ນັບມື້ນັບດີຂຶ້ນ.

ຍຸດທະສາດ ການອຳນວຍຄວາມສະດວກທາງດ້ານການຄ້າ ປະກອບມີ 6 ຍຸດທະສາດຄື:

1) ຍົກສູງ ວຽກງານອຳນວຍຄວາມສະດວກ ທາງດ້ານການຄ້າ ໃນບັນດາກະຊວງທີ່ກ່ຽວຂ້ອງ,
2) ເຮັດໃຫ້ຂັ້ນຕອນດ້ານການຄ້າ ແລະ ພາສີ ມີຄວາມກະທັດຮັດ, ໂປ່ງໃສ, ສະດວກວ່ອງໄວ ແລະ ກົມກຽວກັນ,
3) ຈັດຕັ້ງປະຕິບັດບັນດາພັນທະໃນຂອບສອງຝ່າຍ, ອະນຸພາກພື້ນ, ພາກພື້ນ ແລະ ສາກົນ,
4) ປັບປຸງ ແລະ ສ້າງຂີດຄວາມສາມາດຂອງພາກທຸລະກິດໃຫ້ສາມາດດຳເນີນການຄ້າໄດ້ຢ່າງມີປະສິດທິຜົນ ໂດຍສອດຄ່ອງກັບລະບຽບຫຼັກການ,
5) ສະໜອງອຸປະກອນ ແລະ ສິ່ງອຳນວຍຄວາມສະດວກທີ່ສອດຄ່ອງກັບຄວາມຕ້ອງການ ເພື່ອຮັບປະກັນການບໍລິຫານຄຸ້ມຄອງ ຂັ້ນຕອນດ້ານການຄ້າ ແລະ ພາສີໃຫ້ມີຄວາມຄ່ອງຕົວ ແລະ ມີປະສິດທິພາບ, ແລະ
6) ສ້າງຕັ້ງ ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ. ເພື່ອຈັດຕັ້ງຜັນຂະຫຍາຍຍຸດທະສາດດັ່ງກ່າວໃຫ້ປະກົດຜົນເປັນຈິງ ຈຳເປັນທີ່ຈະຕ້ອງໄດ້ສ້າງແຜນປະຕິບັດງານລະອຽດ ເພື່ອເປັນການແບ່ງຄວາມຮັບຜິດ



ກອງປະຊຸມສຳມະນາເຜີຍແຜ່ແຜນຍຸດທະສາດ ການອຳນວຍຄວາມສະດວກທາງດ້ານການຄ້າ 2011 -2015 ທີ່ແຂວງ ຫຼວງພະບາງ



ຊອບໃຫ້ແຕ່ລະຂະແໜງການ ທີ່ປິ່ນອ້ອມວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ຢ່າງຈະແຈ້ງ.

ສະນັ້ນ, ວຽກງານເຜີຍແຜ່ ແລະ ລະດົມຄວາມຄິດເຫັນຢ່າງກ້ວາງຂວາງ ໃນຂອບເຂດທົ່ວປະເທດ ກ່ຽວກັບຍຸດທະສາດດັ່ງກ່າວ ແມ່ນມີຄວາມຈຳເປັນພາວະວິໄສ. ໃນໄລຍະຜ່ານມາ, ຫ້ອງການ ປະຈຳກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ (ກົມການນຳເຂົ້າ ແລະ ສົ່ງອອກ) ໄດ້ເຮັດສຳເລັດວຽກງານດັ່ງກ່າວ ໃຫ້ບັນດາແຂວງພາກໃຕ້ (ທີ່ແຂວງຈຳປາສັກ), ແຂວງພາກກາງ (ທີ່ແຂວງບໍລິຄຳໄຊ) ແລະ ແຂວງພາກເໜືອ (ທີ່ແຂວງຫຼວງພະບາງ) ໂດຍມີຜູ້ເຂົ້າຮ່ວມຈາກ ທັງພາກລັດ ແລະ ພາກທຸລະກິດ ຊຶ່ງປະກອບມີ: ພະແນກອຸດສາຫະກຳ ແລະ ການຄ້າ, ຫ້ອງວ່າການແຂວງ, ພະແນກໂຍທາທິການ ແລະ ຂົນສົ່ງ, ພາສີເຂດ, ພະແນກສາທາລະນະສຸກ, ພະແນກກະສິກຳ ແລະ ປ່າໄມ້, ພະແນກແຜນການ ແລະ ການລົງທຶນ, ສະພາການຄ້າ ແລະ ອຸດສາຫະກຳແຂວງ ແລະ ພາກທຸລະກິດນຳເຂົ້າ ແລະ ສົ່ງອອກ ຈຳນວນໜຶ່ງ.

ເພື່ອເຮັດບັ້ນລຸວັດຖຸປະສົງ ແລະ ລະດັບຄາດໝາຍຂອງຍຸດທະສາດອຳນວຍຄວາມສະດວກທາງດ້ານການຄ້ານັ້ນຈຶ່ງຮຽກຮ້ອງໃຫ້ບັນດາຂະແໜງການ ທີ່ປິ່ນອ້ອມວຽກງານການອຳນວຍຄວາມສະດວກ ທາງດ້ານການຄ້າ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດແຜນຍຸດທະສາດດັ່ງກາວ.



# ກອງປະຊຸມສຳມະນາຫົວຂໍ້ "ການຄ້າຕ່າງປະເທດ ແລະ ການສ້າງຄວາມສາມາດໃນການແຂ່ງຂັນຫລັກສູດລະດັບສູງ"

ໂດຍ: ສະຖາບັນຄົ້ນຄ້ວາເສດຖະກິດການຄ້າ

ການຝຶກອົບຮົມເລື່ອງ ການຄ້າຕ່າງປະເທດ ແລະ ການສ້າງຄວາມສາມາດໃນການແຂ່ງຂັນ ໃນຄັ້ງນີ້ສ່ວນຫລາຍແມ່ນໄດ້ເນັ້ນໃສ່ບັນດາວິຊາໃນລະດັບຂັ້ນສູງຂອງຫລັກສູດ. ດັ່ງນັ້ນຈຶ່ງໄດ້ມີການກະ ກຽມເຮັດວຽກຮ່ວມກັນຂອງບັນດາຄູຝຶກ ແລະ ທີມງານຈັດຝຶກອົບຮົມ ກ່ອນໜ້າການເປີດກອງປະຊຸມສຳມະນາໃນລະຫວ່າງ ວັນທີ 07-11 ພຶດສະພາ 2012. ການຝຶກອົບຮົມໃນຫົວຂໍ້ດັ່ງກ່າວນີ້ໄດ້ເຄີຍຈັດຂຶ້ນໃນເດືອນທັນວາຂອງປີທີ່ຜ່ານມາ ພາຍໃຕ້ການນຳສະເໜີຂອງຄູຝຶກຈາກ ສສຄ ແລະ ການຕິດຕາມຢ່າງໃກ້ຊິດຈາກຜູ້ຊ່ຽວຊານຂອງ Estey Centre. ຊຶ່ງຜູ້ຊ່ຽວຊານຈາກ Estey Centre ແມ່ນໄດ້ມາຕິດຕາມ, ໃຫ້ຄຳແນະນຳ ແລະ ໃຫ້ຂໍ້ມູນຕ່າງໆ ເພື່ອເສີມໃນບາງຈຸດທີ່ມີຄວາມສົນໃຈເພີ່ມເຕີມ. ການຝຶກອົບຮົມໃນຄັ້ງນີ້, ສສຄ ໄດ້ສະແດງໃຫ້ເຫັນເຖິງສັກກະຍະພາບໃນການພັດທະນາຂີດຄວາມສາມາດ ແລະ ການຈັດຝຶກອົບຮົມໃນຫລັກສູດ ການຄ້າຕ່າງປະເທດ ແລະ ການສ້າງຄວາມສາມາດໃນການແຂ່ງຂັນ ໃຫ້ແກ່ພະນັກງານໃນຂະແໜງອຸດສາຫະກຳ ແລະ ການຄ້າ ໃນສູນກາງ ແລະ ທ້ອງຖິ່ນ.

ບັນດາຄູຝຶກສ່ວນໃຫຍ່ແມ່ນມາຈາກ ສສຄ ແລະ ນອກຈາກນັ້ນກໍ່ແມ່ນມາຈາກກົມຕ່າງໆໃນຂອບເຂດຂອງກະຊວງອຸດສາຫະກຳ ແລະ ການຄ້າ. ກ່ອນໜ້າການຈັດຝຶກອົບຮົມ ຜູ້ຊ່ຽວຊານຈາກ Estey Centre ແມ່ນໄດ້ເຮັດວຽກນຳບັນດາຄູຝຶກແບບໂຕຕໍ່ໂຕ ໂດຍທົບທວນຄືນບົດຮຽນທີ່ຈະກະກຽມ ສອນໃນແຕ່ລະບົດ ແລະ ປຶກສາຫາລືແລກປ່ຽນຂໍ້ມູນໃໝ່ໆເພື່ອປະກອບເຂົ້າໃນບົດສອນ. ເພື່ອເຮັດໃຫ້ການຝຶກອົບຮົມດຳເນີນໄປດ້ວຍດີ ນອກຈາກປະກອບດ້ວຍທີມຂອງບັນດາຄູຝຶກແລ້ວ, ກໍ່ຍັງປະກອບດ້ວຍທີມງານ ຂອງ ERIT/GSEU ພາຍໃຕ້ການຕິດຕາມຂອງ Estey Centre ອີກດ້ວຍ.

ຈາກການປະເມີນຜົນຂອງການຈັດການຝຶກອົບຮົມໃນຄັ້ງນີ້ ແມ່ນອີກເທື່ອໜຶ່ງໄດ້ຢ້ຳໃຫ້ເຫັນວ່າ ການນຳສະເໜີຂອງບັນດາຄູຝຶກແມ່ນໄດ້ໃຫ້ປະໂຫຍດຫລາຍ ແລະ ໄດ້ມີການກະກຽມມາເປັນຢ່າງດີ. ໃນຂະບວນການຂອງການກະກຽມ ແລະ ການຈັດຝຶກອົບຮົມ ລວມໄປເຖິງການປະສານງານຕ່າງໆ ໄດ້ສະແດງໃຫ້ເຫັນ ເຖິງແງ່ມູມຫລາຍໆຢ່າງ, ຈາກຄູຝຶກຈົນເຖິງແຜນວຽກເຊັ່ນ: ການອັບເດັດຂໍ້ມູນ, ການດັດປັບບົດຮຽນ ລວມໄປເຖິງການນຳສະເໜີຕົວຢ່າງທີ່ແມ່ນສະພາບຕົວຈິງຂອງບ້ານເຮົາ ເພື່ອໃຫ້ແທດເໝາະກັບວິທີການຂອງຄູຝຶກແຕ່ລະຄົນ ແລະ ເພື່ອໃຫ້ຖືກຕ້ອງຕາມຈຸດປະສົງ ແລະ ຄວາມຄາດຫວັງຂອງນັກສຳມະນາກອນ ອີກດ້ວຍ.

ຜ່ານການກະກຽມເປັນຢ່າງດີ ໄດ້ສະແດງອອກໃນເວລານຳສະເໜີບົດຂອງບັນດາຄູຝຶກແບບເປັນກັນເອງ ແລະ ໃຫ້ຄຳອະທິບາຍຢ່າງຈະແຈ້ງໃນເວລາສິດສອນ. ສສຄ ແມ່ນໄດ້ຮັບຜົນສຳເລັດຢ່າງສູງ ໃນການເຮັດວຽກເປັນທີມ, ມີຄວາມກະຕືລືລົ້ນ ແລະ ການກະກຽມທີ່ດີ ຊຶ່ງໄດ້ສິ່ງຜົນອັນດີໃນການສ້າງ ແລະ ສືບຕໍ່ພັດທະນາສັກກະຍະພາບ ແລະ ຖ່າຍທອດຄວາມຮູ້ໃນການຈັດຝຶກອົບຮົມທີ່ມີປະສິດທິ ພາບສູງ. ນອກຈາກນັ້ນ, ທີມງານ ຂອງ ສສຄ ແມ່ນໄດ້ຮັບການສະໜັບສະໜູນເປັນຢ່າງດີ ຈາກພະນັກງານຜູ້ທີ່ເຮັດວຽກຕົວຈິງຈາກກົມກອງອື່ນໆອ້ອມຂ້າງກະຊວງ.




*ກອງປະຊຸມສຳມະນາຫົວຂໍ້ "ການຄ້າຕ່າງປະເທດ ແລະ ການສ້າງຄວາມ ສາມາດໃນການແຂ່ງຂັນຫລັກສູດ Advance"*
*ຈັດຂຶ້ນທີ່ ERIT ໃນວັນທີ 7-11 ພຶດສະພາ, 2012*

# ບົດບາດ ແລະ ຄວາມສຳຄັນໃນການຄຸ້ມຄອງຫົວໜ່ວຍທຸລະກິດການຄ້າ (SME) ໃນເງື່ອນໄຂການເຊື່ອມໂຍງເສດຖະກິດກັບສາກົນ

ໂດຍ: ເຂັມທອງ ພົມມາລາ, ຫ້ອງການ SME

ຫົວໜ່ວຍທຸລະກິດການຄ້າ ແມ່ນຈຸລັງພື້ນຖານໜຶ່ງ ໃນໂຄງປະກອບເສດຖະກິດແຫ່ງຊາດ, ເຮັດໜ້າທີ່ເປັນສື່ກາງຂອງສາຍພົວພັນ ລະຫວ່າງການສະໜອງ ແລະ ຄວາມຕ້ອງການ, ປະຕິບັດພາລະກິດບໍລິການໃນການຈໍລະຈອນແຈກຢາຍສິນຄ້າ ແລະ ການບໍລິການຈາກບ່ອນໜຶ່ງໄປຍັງອີກບ່ອນໜຶ່ງ, ຈາກບ່ອນຫຼາຍ ໄປຫາບ່ອນໜ້ອຍ, ຈາກບ່ອນທີ່ມີລາຄາຕໍ່າໄປບ່ອນທີ່ມີລາຄາສູງ, ຈາກຜູ້ຜະລິດ ໄປສູ່ຜູ້ຊົມໃຊ້ໃນສັງຄົມ (ເປັນຕ່ອງໂສ້ລະຫວ່າງການຜະລິດ ແລະ ການຊົມໃຊ້) ໂດຍຜ່ານຂະບວນການແລກປ່ຽນຜະລິດຕະພັນ ແລະ ຊື້-ຂາຍສິນຄ້າ ທາງການຕະຫຼາດ ແລະ ເຄື່ອນໄຫວຢູ່ພາຍໃຕ້ກົດເກນລາຄາທີ່ມີເງິນເປັນສື່ກາງຂອງສາຍພົວພັນ ຊື້-ຂາຍ. ທັງນີ້ກໍ່ເພື່ອຕອບສະໜອງຄວາມຕ້ອງການດ້ວຍຫຼາຍຮູບແບບແກ່ສັງຄົມ ກໍ່ຄືແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ. ຫົວໜ່ວຍທຸລະກິດການຄ້າປະກອບດ້ວຍ 2 ປະເພດໃຫຍ່ຄື: ຫົວໜ່ວຍທຸລະກິດການຄ້າຢູ່ພາຍໃນ ແລະ ການຄ້າຕ່າງປະເທດ ຊຶ່ງຫົວໜ່ວຍທຸລະກິດການຄ້າເຫຼົ່ານີ້ຕອບສະໜອງສິນຄ້າໃນ 2 ຂະແໜງການໃຫຍ່ຄື: ສິນຄ້າຊົມໃຊ້ (ແມ່ນປະເພດສິນຄ້າສຳເລັດຮູບທຸກຊະນິດທີ່ຜູ້ຊື້ສາມາດນຳໃຊ້ໄປໄດ້ເລີຍ) ແລະ ສິນຄ້າທຶນ (ແມ່ນປະເພດສິນຄ້າທີ່ເປັນ



ວັດຖຸປະກອບເຂົ້າໃນການຜະລິດເຊັ່ນ: ວັດຖຸດິບ, ເຄື່ອງຈັກ-ເຄື່ອງລານ, ເຄື່ອງກໍ່ສ້າງ...).

ອັນສຳຄັນຫົວໜ່ວຍທຸລະກິດການຄ້າປະກອບສ່ວນເຂົ້າໃນການຫັນໂຄງປະກອບເສດຖະກິດຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ ຊຶ່ງຫົວໜ່ວຍວິສາຫະກິດການຄ້າປະກອບສ່ວນສຳຄັນມ້າງເສດຖະກິດແບບທຳມະຊາດ, ເຄິ່ງທຳມະຊາດ ແລ້ວສ້າງເສດຖະກິດສິນຄ້າ ແລະເສດຖະກິດຕະຫຼາດຂຶ້ນແທນ. ໝາຍຄວາມວ່າຫົວໜ່ວຍທຸລະກິດການຄ້າ ມ້າງແບບການຜະລິດທີ່ກະແຈກກະຈາຍ -ກຸ້ມກິນພໍ່ໃຜພໍ່ລາວ ມາສ້າງ ແລະ ສົ່ງເສີມຜະລິດເປັນສິນຄ້າ, ມ້າງແຜນການດຳລົງຊີວິດທີ່ຂຶ້ນກັບທຳມະຊາດ, ສ້າງໃຫ້ເກີດຕະຫຼາດທ້ອງຖິ່ນ, ຕະຫຼາດເຂດແຄ້ວນ ແລະ ກາວຂຶ້ນສ້າງຕະຫຼາດແຫ່ງຊາດ ແລະ ຕະຫຼາດສາກົນ.

ເວົ້າລວມແລ້ວຫົວໜ່ວຍທຸລະກິດການຄ້າ ມີບົດບາດ ແລະ ຄວາມສຳຄັນໃນພາລະກິດພັດທະນາເສດຖະກິດ-ສັງຄົມ ຂອງປະເທດ ແລະ ບົດບາດນີ້ຈະນັບມື້ນັບເພີ່ມຂຶ້ນໄປຄຽງຄູ່ກັບຂະບວນວິວັດຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ຍ້ອນວ່າທຸລະກິດການຄ້າແມ່ນສິ່ງກະຕຸກຊຸກຍູ້ໃຫ້ແກ່ການຂະຫຍາຍເສດຖະກິດ-ສັງຄົມ, ສ້າງວຽກເຮັດງານທຳ, ລະດົມທຶນພາຍໃນປະເທດ.

ຈາກບົດບາດ ແລະ ຄວາມສຳຄັນຂອງຫົວໜ່ວຍທຸລະກິດການການຄ້າ. ດັ່ງນັ້ນ, ເພື່ອຢາກໃຫ້ບັນລຸໄດ້ຕາມຈຸດປະສົງທີ່ກ່າວມາຂ້າງເທິງນັ້ນ ມັນຮຽກຮ້ອງໃຫ້ມີກົນໄກການຄຸ້ມຄອງທີ່ດີ. ນີ້ສະແດງວ່າ ກົນໄກການຄຸ້ມຄອງຫົວໜ່ວຍທຸລະກິດການຄ້າ ແມ່ນມີບົດບາດ ແລະ ຄວາມສຳຄັນຕໍ່ການຕັດສິນຜົນ ໄດ້-ຜົນເສຍໃນການຄຸ້ມຄອງຫົວໜ່ວຍທຸລະກິດການຄ້າ. ດັ່ງນັ້ນ, ໃນທີ່ນີ້ຈະໄດ້ຍົກໃຫ້ເຫັນບົດບາດ ແລະ ຄວາມສຳຄັນໃນການຄຸ້ມຄອງຫົວໜ່ວຍທຸລະກິດການຄ້າບາງຈຸດຄື:

ໃນທຸກໆວຽກງານການຈັດຕັ້ງ ແມ່ນລ້ວນແລ້ວແຕ່ມີທີ່ຕັ້ງອັນສະເພາະທີ່ແນ່ນອນຂອງໃຜລາວ, ສະນັ້ນວຽກງານການຄຸ້ມຄອງຫົວໜ່ວຍທຸລະກິດການຄ້າກໍ່ມີທີ່ຕັ້ງອັນສະເພາະໂດຍນອນຢູ່ໃນລະບົບຄຸ້ມຄອງເສດຖະກິດ, ເປັນໂຄງປະກອບການຄຸ້ມຄອງຂອງລັດ ຊຶ່ງເຮັດພາລະບົດບາດຄຸ້ມຄອງມະຫາພາກ ເພື່ອພັດທະນາຂະແໜງການຄ້າໃນຂອບເຂດທົ່ວປະເທດ. ແນໃສ່ຊຸກຍູ້ ແລະ ຂະຫຍາຍການຜະລິດ, ຫັນປ່ຽນເສດຖະກິດທຳມະຊາດເປັນເສດຖະກິດສິນຄ້າ, ເຮັດໃຫ້ຕະຫຼາດພາຍໃນມີການຂະຫຍາຍຕົວ ແລະ ເຊື່ອມຕົວເຂົ້າຕະຫຼາດໃນພາກພື້ນ ແລະ ສາກົນ, ປັບປຸງພື້ນຖານໂຄງລ່າງການບໍລິການ ແລະ ສົ່ງເສີມການສົ່ງອອກກັບທີ່ໃຫ້ດີຂຶ້ນ. ຊຶ່ງໃນນີ້ມີບາງລາຍລະອຽດຂອງບົດບາດດັ່ງກ່າວໄດ້ສະແດງອອກຄື:

- ການຄຸ້ມຄອງຫົວໜ່ວຍທຸລະກິດການຄ້າແມ່ນມີບົດບາດຄຸ້ມຄອງຢູ່ຂັ້ນມະຫາພາກ ແລະ ຈຸລະພາກ, ເປັນຜູ້ວາງທິດທາງ, ແຜນການກ່ຽວກັບວຽກງານການຄ້າແຕ່ລະໄລຍະ ໂດຍອອກດຳລັດ, ຂໍ້ກຳນົດ ແລະ ກົດໝາຍເພື່ອເປັນບ່ອນອີງ ແລະ ມາດຕະການໃນການດຳເນີນງານ, ວາງລະບຽບ, ຫຼັກການກ່ຽວກັບການສ້າງ ແລະຄຸ້ມຄອງ, ວາງນະໂຍບາຍຕ່າງໆ ເພື່ອຊຸກຍູ້ໃຫ້ການຜະລິດໃຫ້ຂະຫຍາຍຕົວ ກ້າວໄປເຖິງການພັດທະນາທາງດ້ານເສດຖະກິດ-ສັງຄົມຂອງປະເທດໃຫ້ຮັ່ງມີເຂັ້ມແຂງປະຊາຊົນມີ ແບບແຜນການດຳລົງຊີວິດສົດໃສ, ການເມືອງມີສະຖຽນລະພາບ, ສັງຄົມມີຄວາມສະຫງົບສຸກ ແລະ ຍຸດຕິທຳ.
- ການຄຸ້ມຄອງຫົວໜ່ວຍທຸລະກິດການຄ້າເປັນການສ້າງຄວາມຮູ້, ຄວາມເຂົ້າໃຈ ແລະ ເປັນຊ່ອງທາງໃຫ້ແກ່ການພັດທະນາວຽກງານການຄ້າໃນຂອບເຂດທົ່ວປະເທດ, ແນໃສ່ຍົກລະດັບຄວາມສາມາດ ຄຸ້ມຄອງຂອງອົງການຄຸ້ມຄອງແຕ່ລະຂັ້ນໃຫ້ມີຄວາມກ້າວໜ້າ, ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນການຄຸ້ມຄອງເຮັດໃຫ້ການເຄື່ອນໄຫວປະຕິບັດຕົວຈິງມີລັກສະນະວິທະຍາສາດ ແລະ ມີປະສິດທິຜົນສູງ.

- ມີບົດບາດ ໃນການກະຕຸກຊຸກຍູ້ໃຫ້ການຜະລິດສິນຄ້າ ນັບມື້ນັບຫຼາຍ, ເປີດກ້ວາງ ແລະ ຂະຫຍາຍຕະຫຼາດເຮັດໃຫ້ການຄ້າທະລຸໂລ່ງໃນຂອບເຂດທົ່ວປະເທດ, ຮັບປະກັນການເຕີບໃຫຍ່ຂະຫຍາຍຕົວເທື່ອລະກ້າວ, ເປັນຕົວແທນຕິດຕໍ່ພົວພັນ, ເຊັນສັນຍາຮ່ວມທຸລະກິດກັບຕ່າງປະເທດ, ໂຄສະນາສິນຄ້າຂອງລາວ ຢູ່ບັນດາປະເທດຕ່າງໆເພື່ອເຮັດໃຫ້ຕະຫຼາດຂອງລາວເຮົາມີການຂະຫຍາຍຕົວ ແລະ ເຊື່ອມຕົວເຂົ້າກັບຕະຫຼາດພາກພື້ນ ແລະ ສາກົນຕາມທິດກ້າວຂຶ້ນສັງຄົມນິຍົມທີ່ພັກກຳນົດໄວ້. ໝາຍຄວາມວ່າມັນຕັດສິນທຸກບາດກ້າວເດີນຂອງປະເທດຊາດພວກເຮົາບົນເສັ້ນທາງແຫ່ງການກ້າວຂຶ້ນສັງຄົມນິຍົມຂອງພັກເຮົາ. ການກ້າວເດີນ ຫຼື ຂະຫຍາຍຕົວຂອງປະເທດເຮົາຈະໄປຕາມທິດ ຫຼື ພົ້ນອອກຈາກແນວທາງແມ່ນຂຶ້ນກັບການນຳພາຄຸ້ມຄອງນັ້ນເອງ. ສະນັ້ນ, ການຄຸ້ມຄອງຫົວໜ່ວຍທຸລະກິດການຄ້າ ແມ່ນບັນຫາທີ່ຈຳເປັນຢ່າງພາວະວິໄສໃນການພັດທະນາເສດຖະກິດ-ສັງຄົມ ຂອງປະເທດເຮົາດັ່ງ ທ່ານປະທານໄກສອນ ພົມວິຫານ ໄດ້ຢັ້ງຢືນເຖິງບົດບາດຂອງວຽກງານການຄ້າວ່າ: "ປະຈຸບັນປະເທດເຮົາຖືເອົາການຄ້າເປັນຕົ້ນຕໍເພື່ອຊຸກຍູ້ການຜະລິດໃຫ້ຂະຫຍາຍຕົວ, ເອົາອຸດສາຫະກຳຕິດພັນກັບກະສິກຳ-ປ່າໄມ້, ເອົາຕົວເມືອງຕິດພັນກັບຊົນນະບົດ, ເຮັດໃຫ້ຊົນນະບົດຫຼຸດພົ້ນອອກຈາກສະພາວະເສດຖະກິດກຸ່ມຕົວເອງພໍໃຊ້ພໍລາວເຮັດໃຫ້ເສດຖະກິດແຫ່ງຊາດເປັນເອກະພາບເທື່ອລະກ້າວ".
- ການຄຸ້ມຄອງຫົວໜ່ວຍທຸລະກິດການຄ້າແມ່ນດຳເນີນການສົ່ງເສີມດ້ານຕັ້ງໜ້າ ແລະ ຈຳກັດດ້ານຍໍ້ທໍ້ຂອງເສດຖະກິດຕະຫຼາດ, ສ້າງກົນໄກ ແລະ ສິ່ງເອື້ອອຳນວຍເຮັດໃຫ້ເສດຖະກິດຕະຫຼາດເຄື່ອນໄຫວຢ່າງເຕັມສ່ວນບົນພື້ນຖານຫຼັກການ "ພັກນຳພາ ລັດຄຸ້ມຄອງ ປະຊາຊົນເປັນເຈົ້າ" ເພື່ອແນໃສ່ ສ້າງພື້ນຖານເສດຖະກິດແຫ່ງຊາດໃຫ້ມີການເຕີບໂຕ ແລະ ມີການພັດທະນາແບບຍືນຍົງ.
- ໃນເງື່ອນໄຂເປີດປະຕູສູ່ໂລກພາຍນອກ, ການຄຸ້ມຄອງລັດຕໍ່ເສດຖະກິດ ກໍ່ຄືການຄ້າແມ່ນ ມີບົດບາດ ແລະ ຄວາມສຳຄັນຫຼາຍທີ່ສຸດ ຊຶ່ງແມ່ນທາງອຽງພາວະວິໄສສຳລັບທຸກໆປະເທດໃນໂລກ ເພາະມັນປະກອບສ່ວນເປັນກຳລັງດັນໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ໃຫ້ເຕີບໃຫຍ່ຂະຫຍາຍຕົວ, ເປັນບ່ອນສ້າງວຽກເຮັດງານທຳແກ້ໄຂໄພວ່າງງານໃຫ້ຊາວຜູ້ອອກແຮງງານບັນດາເຜົ່າເຮັດໃຫ້ເຂົາ ເຈົ້າມີລາຍຮັບເພີ່ມຂຶ້ນ ແລະ ສາມາດບຳບັດຄວາມຕ້ອງການເຮັດໃຫ້ຊີວິດການເປັນຢູ່ຂອງຄອບຄົວມີຄວາມສະຫງົບສຸກ. ສິ່ງດັ່ງກ່າວມັນສະແດງອອກດັ່ງ ທ່ານ ເລນິນ ກ່າວວ່າ: "ໃນທຸກມື້ນີ້ໜ້າທີ່ການຄຸ້ມ ຄອງໄດ້ກາຍເປັນໜ້າທີ່ຕົ້ນຕໍ ແລະ ໃຈກາງ. ພວກເຮົາ, ພັກໂບນເຊວິກ ສາມາດຄຸ້ມຄອງປະເທດລັດເຊຍ ໄດ້ແລ້ວ, ພວກເຮົາຍາດເອົາປະເທດລັດເຊຍຈາກກຳມືຂອງພວກຮັ່ງມີຄືນມາໃຫ້ແກ່ຊາວຜູ້ທຸກຍາກ, ຈາກກຳມືພວກຂູດຮີດເພື່ອມອບຄືນໃຫ້ແກ່ຊາວຜູ້ອອກແຮງງານ, ມາເຖິງເວລານີ້ພວກເຮົາຕ້ອງຄຸ້ມຄອງປະເທດ ລັດເຊຍ".
- ທ່ານ ຄຳໄຕ ສີພັນດອນ ອາດີດປະທານຄະນະບໍລິຫານງານສູນກາງພັກປະຊາຊົນລາວກ່າວຕໍ່ກອງປະຊຸມໃຫຍ່ຄັ້ງທີ VIII ວ່າ: "ການຄຸ້ມຄອງຂອງລັດຕໍ່ເສດຖະກິດກໍ່ໄດ້ຮັບການປັບປຸງ, ເສດຖະກິດມະຫາພາກໄດ້ມີສະຖຽນລະພາບໂດຍພື້ນຖານ, ຜົນກະທົບຫຍໍ້ທໍ້ຂອງກົນໄກຕະຫຼາດໄດ້ຮັບການດັບສົມ ແລະ ຖືກຈຳກັດ, ອຸປະສັກຂັດຂວາງການຈໍລະຈອນສິນຄ້າໄດ້ຮັບການແກ້ໄຂໄປເທື່ອລະກ້າວ, ເຮັດໃຫ້ຕະຫຼາດແຫ່ງຊາດເຄື່ອນໄຫວຢ່າງມີຊີວິດຊີວາ ແລະ ເຮັດໃຫ້ການເຊື່ອມໂຍງເຂົ້າກັບຕະຫຼາດສາກົນມີບາດກ້າວຂະຫຍາຍຕົວຕື່ມ; ການພົວພັນຮ່ວມມືເສດຖະກິດການຄ້າກັບບັນດາປະເທດ ແລະ ເຂດແຄວ້ນໄດ້ເປີດກວ້າງອອກ, ຫຼາຍບໍລິສັດຂອງປະເທດເຮົາກໍ່ເລີ່ມເຂົ້າສູ່ແວດວົງທຸລະກິດສາກົນ, ຍາດແຍ່ງເອົາສ່ວນແບ່ງດ້ານການຕະຫຼາດ ແລະ ຜົນປະໂຫຍດໄດ້ພໍສົມຄວນ". ຕໍ່ກັບບັນຫານີ້, ວຽກງານການຄຸ້ມຄອງຫົວໜ່ວຍທຸລະກິດການຄ້າ ຈຶ່ງມີບົດບາດ ແລະ ຄວາມສຳຄັນເພາະຄຸ້ມຄອງຖືກຕ້ອງຈຶ່ງຈະນຳຜົນປະໂຫຍດເສດຖະກິດສູງສຸດມາໃຫ້ແກ່ພວກເຮົາ, ເຮັດໃຫ້ເສດຖະກິດ-ສັງຄົມມີບາດກ້າວຂະຫຍາຍຕົວຢ່າງໜັກແໜ້ນ ແລະ ເຂັ້ມແຂງ.

ສັງລວມແລ້ວ ການຄຸ້ມຄອງຫົວໜ່ວຍທຸລະກິດການຄ້າ ແມ່ນປັດໄຈຕົ້ນຕໍ ຂອງຂະບວນການຊຸກຍູ້ການຜະລິດ, ການຈໍລະຈອນສິນຄ້າ ແລະ ການຕະຫຼາດໂດຍຜ່ານຂະບວນວິວັດແຫ່ງການສ້າງ ແລະ ດັດສົມຂອງພັກ-ລັດຖະບານ. ເວົ້າອີກຢ່າງໜຶ່ງ, ຖ້າປະເທດໃດຫາກມີການຈັດຕັ້ງຄຸ້ມຄອງເສດຖະກິດ ກໍ່ຄືຫົວໜ່ວຍທຸລະກິດການຄ້າໄດ້ດີ ແລະ ມີປະສິດທິພາບສູງ ຈະເຮັດໃຫ້ສະພາບເສດຖະກິດ-ສັງຄົມ ແລະ ວັດທະນະທຳຂອງປະເທດນັ້ນມີການຂະຫຍາຍຕົວໄວດີ, ສະພາບສັງຄົມມີຄວາມສະຫງົບ, ສະຖຽນລະພາບທາງດ້ານການເມືອງມີຄວາມໝັ້ນຄົງ, ວັດທະນະທຳຂອງຊາດກໍ່ໄດ້ຮັບການບູລະນະ ແລະ ການພັດທະນາ, ບົດບາດ, ການຄຸ້ມຄອງລັດຕໍ່ເສດຖະກິດກໍ່ໄດ້ຮັບຄວາມນິຍົມຊົມຊອບ ແລະ ມີການເຊື່ອໝັ້ນຈາກມະຫາຊົນ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ກໍ່ໄດ້ຮັບການພັດທະນາ, ມີແບບແຜນດຳລົງຊີວິດທີ່ສົດໃສເທື່ອລະກ້າວ.



# ມາດຕະຖານທັກສະຄວາມສາມາດໃນການສ້າງປະຊາຄົມອາຊຽນ

*ກຳລັງແຮງງານທີ່ເຮັດວຽກຢູ່ໂຮງງານອຸດສາຫະກຳຕັດຫຍິບລາວ ສາມາດສະໝັກທົດສອບ ເພື່ອຮັບການຢັ້ງຢືນສີມືແຮງງານມາດຕະຖານອາຊຽນ*

ໂດຍ: ສູນພັດທະນາສີມືແຮງງານຕັດຫຍິບ (GSC)



ປະຈຸບັນກຳລັງແຮງງານທີ່ເຮັດວຽກຢູ່ ໂຮງງານອຸດສາຫະກຳ ຕັດຫຍິບລາວ ສາມາດຍົກລະດັບສີມືໃຫ້ໄດ້ຕາມມາດຕະຖານ ຄືກັບກຳລັງແຮງງານ ໃນບັນດາປະເທດຊະມາຊິກອາຊຽນ, ຫຼັງຈາກທີ່ຜ່ານການ ຝຶກອົບຮົມ ແລະ ສະໝັກເຂົ້າຮັບການທົດສອບ ທີ່ຮັບຮອງໂດຍມາດຕະຖານ ທັກສະຄວາມສາມາດ ໃຊ້ຮ່ວມກັນໃນອາຊຽນ

ສະມາຄົມອຸດສາຫະກຳຕັດຫຍິບລາວໄດ້ເຊັນ MOU ກັບ ສະຫະພັນອຸດສາຫະກຳແຜ່ນແພອາຊຽນ (ASEAN Federation of Textile Industries ຫຼື AFTEX) ໃນການເລີ່ມນຳໃຊ້ ມາດຕະຖານທັກສະຄວາມສາມາດສຳລັບຕຳແໜ່ງງານໃນອຸດສາຫະກຳແຜ່ນແພ ແລະ ອຸດສາຫະກຳຕັດຫຍິບຢູ່ ສປປ ລາວ ຜ່ານລະບົບການທົດສອບ ແລະ ອອກ ໃບຢັ້ງຢືນຮັບຮອງສີມືແຮງງານຕາມລະດັບຂັ້ນ.

ສະມາຄົມອຸດສາຫະກຳຕັດຫຍິບລາວ ເຂົ້າເປັນສະມາຊິກຂອງ AFTEX ຢ່າງເປັນທາງການ ໃນປີ 2000. AFTEX ແມ່ນອົງກອນທີ່ມີການຮວມຕົວຂອງ ສະມາຄົມແຜ່ນແພແລະຕັດຫຍິບ ຂອງບັນດາປະເທດ ສະມາຊິກອາຊຽນ ເຊິ່ງປະຈຸບັນ ປະເທດຊະມາຊິກຂອງສະຫະພັນລວມມີ ກຳປູເຈຍ, ລາວ, ມາເລເຊຍ, ສະຫະພາບພະມ້າ, ຟີລິບປິນ, ສິງກະໂປ, ໄທ ແລະຫວຽດນາມ. ນຶ່ງໃນຫຼາຍໆ





*ພິທີເປີດສູນພັດທະນາສີມືແຮງງານຕັດຫຍິບ, ວັນທີ 7 ພະຈິກ 2011*

ໂຄງການຂອງ AFTEX ແມ່ນການໃຫ້ບໍລິການ ແລະການສະໜັບສະໜູນ ການຮ່ວມມື ແລະ ການປະສານງານ ໃນພາກອຸດສາຫະກໍາຕັດຫຍິບ ລະຫວ່າງປະເທດຊະມາຊິກອາຊຽນດ້ວຍກັນ ແລະເປັນໂຄງການພາກເອກະຊົນອັນດຽວຂອງAFTEXທີ່ເຮັດວຽກກັບສໍານັກງານເລຂາທິການອາຊຽນ ທີ່ ຈາກາຕາ.

ສູນພັດທະນາສີມືຕັດຫຍິບ (Garment Skills Development Centre) ເປັນຫົວໜ່ວຍຝຶກອົບຮົມຂອງສະມາຄົມອຸດສາຫະກໍາຕັດຫຍິບລາວ, ເປັນໂຄງການໜຶ່ງພາຍໃຕ້ກອບໂຄງການກອງທຶນຊ່ວຍເຫຼືອລ້າຫຼາຍຝ່າຍເພື່ອພັດທະນາການຄ້າ (Trade Development Facility - TDF) ມີເປົ້າໝາຍເພື່ອ "ເພີ່ມທະວີຄວາມອາດສາມາດໃນການແຂ່ງຂັນຂອງຂະແໜງການອຸດສາຫະກໍາຕັດຫຍິບ". ຊີ້ນໍາໂດຍກົມສົ່ງເສີມ ແລະພັດທະນາສິນຄ້າ, ກົມແຜນການ ແລະ ການຮ່ວມມື ກະຊວງອຸດສາຫະກໍາ ແລະ ການຄ້າ.

ສູນພັດທະນາສີມືຕັດຫຍິບ ໄດ້ຮັບມອບໝາຍໃຫ້ເປັນຜູ້ດໍາເນີນການທົດສອບ ແລະອອກໃບຢັ້ງຢືນຂອງAFTEX. ປັດຈຸບັນ ມາດຕະຖານທັກສະຄວາມສາມາດ ຂອງ AFTEX ທີ່ສໍາເລັດການພັດທະນາ ແລະ ພ້ອມນໍາໃຊ້ໄດ້ແລ້ວ ສໍາລັບ 5 ຕໍາແໜ່ງງານຄື: ຊ່າງຫຍິບຈັກອຸດສາຫະກໍາ ລະດັບ 1 (Sewing Machine Operator Level 1), ຫົວໜ້າງານຫຍິບ ລະດັບ 3 (Sewing Machine Supervisor Level 3), ຊ່າງເຮັດແບບ ລະດັບ 2 (Pattern Maker Level 2) ແລະ ພະນັກງານສົ່ງເສີມການຂາຍ ລະດັບ 3 (Merchandiser Level 3).

ໃນເດືອນ ມິຖຸນາ, ຄູຝຶກ ແລະທີມງານສູນພັດທະນາສີມືຕັດຫຍິບ ຈໍານວນ 4 ທ່ານ ເຊິ່ງເປັນຜູ້ທີ່ມີຄວາມຮູ້ ແລະປະສົບການກ່ຽວຂ້ອງໂດຍກົງ ໄດ້ຮັບການຝຶກອົບຮົມ ເປັນຜູ້ເຮັດການທົດສອບປະເມີນຜົນ, ທາງສູນຍັງໄດ້ພັດທະນາຫຼັກສູດການຝຶກອົບຮົມ ເພື່ອສະໜັບສະໜູນ ແລະສ້າງບຸກຄະລາກອນໃຫ້ມີຄວາມຮູ້ຄວາມສາມາດນໍາໃຊ້ໄດ້ ໃນໂຮງງານອຸດສາຫະກໍາຕັດຫຍິບ ແລະມີຄວາມເໝາະສົມກັບມາດຕະຖານທັກສະຄວາມສາມາດທີ່ກວມ



ເອີາ ໜ້າວຽກ, ຄວາມຮູ້, ຄວາມສາມາດ, ຄວາມຊໍານານທາງເຕັກນິກ ແລະຄຸນສົມບັດ. ຜູ້ສໍາເລັດ ການຝຶກອົບຮົມຫົວຂໍ້ ຫົວໜ້າງານຫຍິບ 45 ຄົນທໍາອິດຈາກສູນ ຈະໄດ້ຮັບແຈ້ງການເພື່ອເຂົ້າຮ່ວມການທົດສອບ ນໍາທາງໃນເດືອນກັນຍາ ປີ 2012 ໃນຊ່າງຫຍິບ ລະດັບ 1, ແລະ ຫົວໜ້າງານຫຍິບ ລະດັບ 3 ແລະຈະຕາມດ້ວຍ ຕໍາແໜ່ງງານ ຊ່າງຈັກຫຍິບ.

ເປັນຄັ້ງທໍາອິດສໍາລັບຂົງເຂດ ແລະໃນໂລກ ທີ່ມີໂຄງການ ການສ້າງມາດຕະຖານທັກສະຄວາມສາມາດ ທີ່ໃຊ້ຮ່ວມກັນ ໂດຍສະເພາະສໍາລັບປະຊາຄົມອາຊຽນ ເພື່ອຕອບໂຕ້ການສະໜອງຜະລິດຕະພັນແຜ່ນແພ ແລະ ເຄື່ອງຕັດຫຍິບ, ເພື່ອສະໜັບສະໜູນ ແລະ ສົ່ງເສີມການຮວບຮວມສີມືແຮງງານໃນຂົງເຂດອາຊຽນ ແລະ ມີຄວາມຈໍາເປັນໃນການສ້າງ ໂຄງການມາດຕະຖານເພື່ອກໍານົດ ແລະຢັ້ງຢືນຫຼືຮັບຮອງວຸດທິຂອງກໍາລັງແຮງງານອາຊຽນ. ໂຄງການ ການສ້າງມາດຕະຖານທັກສະຄວາມສາມາດ ໄດ້ມີການລິເລີ່ມມາແຕ່ ເດືອນ ມິຖຸນາ ປີ 2009, ຈຸດປະສົງຂອງໂຄງການ ແມ່ນຍົກລະດັບ ຂະແໜງການອຸດສາຫະກໍາແຜ່ນແພ ແລະຕັດຫຍິບ ໃນບັນດາປະເທດຊະມາຊິກອາຊຽນ ເພື່ອສາມາດແຂ່ງຂັນກັບຂົງເຂດອື່ນຫຼືຜູ້ອື່ນໄດ້ ໂດຍການເປີດກວ້າງ ທັກສະຄວາມສາມາດໃນຂົງເຂດອາຊຽນ ເພື່ອຮັບປະກັນວ່າແຮງງານອາຊຽນໄດ້ປະຕິບັດງານ ຖືກຕ້ອງເໝາະສົມຕາມທີ່ໄດ້ຄາດໝາຍໄວ້.

*<u>ຂໍ້ມູນເພີ່ມເຕີມ ກະລຸນາຕິດຕໍ່ ສູນພັດທະນາສີມືຕັດຫຍິບ</u>*
*ຖະໜົນ ໂພນຕ້ອງ,ໜ່ວຍ 249, ບ້ານ ສະຫວ່າງ*
*ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ*
*ໂທ/ແຟັກ: + 856(0)21-254226*
*Email: GSC@laosaft.org*



# ການປະເມີນຜົນກະທົບ ຂອງລະບຽບກົດໝາຍ ຕໍ່ການດຳເນີນທຸລະກິດ Regulatory Impact Assessment RIA

ໂດຍ: ຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ

**RIA ແມ່ນຫຍັງ? ແລະ ເປັນຫຍັງຈຶ່ງຕ້ອງ ການ RIA?**

RIA ແມ່ນຂະບວນການໜຶ່ງໃນຂັ້ນຕອນການສ້າງ ແລະ ທົບທວນຄືນລະບຽບກົດໝາຍ, ຊຶ່ງຈຸດປະ ສົງຫລັກຂອງ RIA ແມ່ນແນໃສ່ສ້າງສະພາບແວດລ້ອມທາງດ້ານລະ ບຽບກົດໝາຍ ເພື່ອອຳນວຍຄວາມສະດວກຕໍ່ການດຳ ເນີນທຸລະກິດ ໂດຍນຳໃຊ້ວິທີການທີ່ເໝາະສົມ, ຊຶ່ງລວມ ມີການວິເຄາະຜົນໄດ້-ຜົນເສຍ ແລະ ຄ່າສິ້ນເປືອງທີ່ ບໍ່ຈຳເປັນ ທີ່ກຳນົດໃນລະບຽບກົດໝາຍ. ລະບຽບກົດ ໝາຍທີ່ດີ ແມ່ນເປັນພື້ນຖານອັນສຳຄັນຕໍ່ການຊຸກຍູ້ສົ່ງ ເສີມການພັດທະນາດ້ານເສດຖະກິດ ແລະ ສັງຄົມ. ພ້ອມນີ້ ຍັງຊ່ວຍປົກປັກຮັກສາຄວາມເປັນລະບຽບຮຽບ ຮ້ອຍ ໃນສັງຄົມ ແລະ ສະພາບແວດລ້ອມອີກດ້ວຍ.

RIA ມີເປົ້າໝາຍໃນການປັບປຸງ ສະພາບແວດລ້ອມ ດ້ານລະບຽບກົດໝາຍ ເພື່ອເອື້ອອຳນວຍແກ່ການດຳເນີນ ທຸລະກິດ ໂດຍເນັ້ນໃສ່ສອງຫລັກການຫລັກຄືດັ່ງນີ້:

1. ໃນການສ້າງ ແລະ ນຳໃຊ້ລະບຽບກົດໝາຍມີຄວາມ ໂປ່ງໃສ, ເນື້ອໃນຮັດກຸມ ແລະ ສອດຄ່ອງແທດເໝາະ ກັບສະພາບຕົວຈິງ;
2. ສຸມໃສ່ການຫຼຸດຜ່ອນລະບຽບກົດໝາຍ ທີ່ບໍ່ຈຳ ເປັນ, ຫລຸດຜ່ອນການນຳໃຊ້ເວລາ ແລະ ຄ່າສິ້ນ ເປືອງ ທີ່ບໍ່ຈຳເປັນ ທີ່ມີຕໍ່ການດຳເນີນທຸລະກິດ.

ປະຈຸບັນມີຫລາຍປະເທດໃນທົ່ວໂລກໄດ້ນຳໃຊ້ລະບົບ RIA ເພື່ອປັບປຸງຄຸນນະພາບ ຂອງຂໍ້ມູນຂ່າວສານສະ ໜອງໃຫ້ແກ່ຜູ້ສ້າງ ແລະ ປັບປຸງລະບຽບກົດໝາຍ, ເມື່ອມີຂໍ້ມູນທີ່ດີ ຈະຊ່ວຍເຮັດໃຫ້ ຜູ້ຄົ້ນຄວ້າຮັບຮອງເອົາ ກົດໝາຍ ມີທາງເລືອກທີ່ດີໃຫ້ແກ່ການຕັດສິນໃຈຊຶ່ງ RIA ຈະສ້າງເງື່ອນໄຂ ໃຫ້ແກ່ການສ້າງລະບຽບກົດໝາຍ ໃຫ້ ເປັນລະບຽບກົດໝາຍທີ່ດີ ຕໍ່ການດຳເນີນທຸລະກິດ

**ຂັ້ນຕອນຂອງການຈັດຕັ້ງປະຕິບັດ**

RIA ສາມາດນຳໃຊ້ກັບລະບຽບກົດໝາຍທີ່ສ້າງຂຶ້ນໃໝ່ ແລະ ນຳໃຊ້ກັບລະບຽບກົດໝາຍ ທີ່ຈັດຕັ້ງປະຕິບັດແລ້ວ ແຕ່ນຳໃຊ້ສະເພາະແຕ່ສຳລັບລະບຽບກົດໝາຍ ທີ່ມີຜົນ ກະທົບຕໍ່ການດຳເນີນທຸລະກິດ ເທົ່ານັ້ນ. ໂດຍລວມແລ້ວ, RIA ແມ່ນຈະເໜັ້ນໃສ່ບັນດາລະບຽບກົດໝາຍທີ່ສະເໜີ ສ້າງໃໝ່, ໃນການປະຕິບັດຈະປະກອບມີຂັ້ນຕອນລະ ອຽດດັ່ງລຸ່ມນີ້:

1. ບາດກ້າວທີ 1: ກຳນົດວ່າມີຄວາມຕ້ອງການດ້ານ ລະບຽບກົດໝາຍ
2. ບາດກ້າວທີ 2: ຢັ້ງຢືນວ່າລະບຽບກົດໝາຍທີ່ສະ ເໜີນັ້ນຢູ່ໃນຂອບເຂດ
3. ບາດກ້າວທີ 3: ກະກຽມບົດລາຍງານຜົນກະທົບຂັ້ນ ຕົ້ນ (PIA)
4. ບາດກ້າວທີ 4: ກຳນົດ ຄວາມສຳຄັນຂອງຜົນກະ ທົບດ້ານລະບຽບກົດໝາຍ
5. ບາດກ້າວທີ 5: ກະກຽມບົດລາຍງານກ່ຽວກັບຜົນກະ ທົບດ້ານລະບຽບກົດໝາຍ (RIS)
6. ບາດກ້າວທີ 6: ກະກຽມຜົນສະຫຼຸບການປະເມີນຜົນ ກະທົບດ້ານລະບຽບກົດໝາຍ (RAS)

**ການປະຕິບັດວຽກງານ RIA ຢູ່ ສປປ ລາວ ໃນປະຈຸບັນ**

ເພື່ອສ້າງເງື່ອນໄຂອຳນວຍຄວາມສະດວກແກ່ການລົງ ທຶນທັງພາຍໃນ ແລະ ຕ່າງປະເທດ ລັດຖະບານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ໃນການພັດທະນາລະບຽບກົດໝາຍ ພ້ອມນີ້ ກໍ່ເຫັນວ່າມີຄວາມຈຳເປັນໃນການສ້າງໜ່ວຍ ງານຮັບຜິດຊອບ ເຮັດການປະເມີນຜົນກະທົບຂອງລະ



ບຽບກົດໝາຍຕໍ່ການດຳເນີນທຸລະກິດ (Regulatory Impact Assessment-RIA) ຂຶ້ນຢູ່ບັນດາກະຊວງ ຊະແໜງການໃນຂົງເຂດເສດຖະກິດ. ໂດຍໄດ້ຮັບການຊ່ວຍເຫລືອຈາກທະນາຄານພັດທະນາອາຊີ (ADB) ໃນ ວັນທີ 7 ມິຖຸນາ 2011 ໄດ້ສ້າງຕັ້ງໜ່ວຍ RIA ຂຶ້ນຢູ່ພະແນກກົດໝາຍ, ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ຊຶ່ງທີມງານປະກອບມີພະນັກງານໃນພະແນກກົດໝາຍ ແລະ ຊ່ຽວຊານຈາກ ADB ປະກອບເປັນທີມງານ. ພາຍຫລັງ ໄດ້ສ້າງຕັ້ງຂຶ້ນແລ້ວ ໜ່ວຍງານດັ່ງກາວກໍ່ໄດ້ຈັດຝຶກອົບຮົມໃຫ້ພະນັກງານທັງພາຍໃນກະຊວງ ແລະ ກະຊວງຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອຍົກລະດັບຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບວຽກງານດັ່ງກາວ. ພ້ອມນີ້ ກໍ່ໄດ້ໄດ້ເລືອກເອົາບາງກົດໝາຍ ແລະ ດຳລັດ ທີ່ຈະສ້າງຂຶ້ນໃໝ່ ຫລື ປັບປຸງໃໝ່ ແລະ ທີ່ໄດ້ຈັດຕັ້ງປະຕິບັດມາແລ້ວ ມາເຮັດການປະເມີນຜົນ ຕາມລະບົບ ແລະ ວິທີການຂອງ RIA ຊຶ່ງໃນນີ້ໄດ້ເລືອກເອົາ: ກົດໝາຍ ວ່າດ້ວຍການສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ກາງ (ກົດໝາຍສ້າງໃໝ່); ກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ(ສະບັບປັບປຸງໃໝ່) ແລະດຳລັດວ່າດ້ວຍການນຳເຂົ້າ ແລະ ສົ່ງອອກ ສິນຄ້າ ເລກທີ 228/ນຍ, 22/04/2010.

ໃນອະນາຄົດຄາດວ່າຈະຄ່ອຍໆຂະຫຍາຍໄປສ້າງຕັ້ງໜ່ວຍງານດັ່ງກາວນີ້ຂຶ້ນ ຢູ່ບັນດາກະຊວງຂະແໜງການທີ່ຕິດພັນກັບວຽກງານທາງດ້ານເສດຖະກິດ ແລະ ພາກສ່ວນທີ່ຮັບຜິດຊອບກ່ຽວກັບວຽກງານການສ້າງ ແລະ ປັບປຸງລະບຽບກົດໝາຍ ຊຶ່ງປະຈຸບັນໄດ້ປະສານກັບ ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ກະຊວງຍຸຕິທຳ, ຫ້ອງວ່າການລັດຖະບານ (ກົມກົດໝາຍ) ແລະ ສະພາແຫ່ງຊາດ (ກຳມະທິການເສດຖະກິດ, ແຜນການ ແລະ ການເງິນ) ເພື່ອສ້າງຕັ້ງໜ່ວຍງານ RIA ນີ້ຂຶ້ນໃນອີກບໍ່ດົນນີ້.




*ການຝຶກອົບຮົມວຽກງານ RIA ສຳລັບໜ່ວຍງານວິຊາການໃນກະຊວງ, ວັນທີ 26 ມິຖຸນາ 2012*

# ການຜະລິດເສັ້ນໄໝແບບຍືນຍົງ ໃນ ສປປ ລາວ

ໂດຍ: ກົມສົ່ງເສີມ ແລະ ພັດທະນາສິນຄ້າ, ໂຄງການ SSPP

ຂະແໜງຫັດຖະກຳໄໝມ້ອນລາວ ມີປະຫວັດຄວາມເປັນມາທີ່ຍາວນານ ແລະ ມີຄວາມໝາຍຄວາມສຳຄັນຕໍ່ ສປປ ລາວມາແຕ່ດົນນານ, ປະຈຸບັນນີ້ຂະແໜງຫັດຖະກຳໄໝມ້ອນຍັງສືບຕໍ່ມີບົດບາດສຳຄັນຕໍ່ການພັດທະນາເສດຖະກິດຂອງຊາດ, ດ້ວຍຄວາມເປັນເອກະລັກຂອງຜະລິດຕະພັນໄໝລາວ ທີ່ມີລວດລາຍອັນປານິດສະລັບຊັບຊ້ອນ,ຕໍ່າດ້ວຍມື ແລະ ຍ້ອມດ້ວຍສີທຳມະຊາດທີ່ເປັນປະເພນີສືບທອດມາແຕ່ລຸ້ນປູ່ຍ່າຕາຍາຍ ຈຶ່ງເຮັດໃຫ້ຜະລິດຕະພັນໄໝລາວ ກາຍເປັນສິນຄ້າທີ່ມີຄຸນນະພາບ ແລະ ເປັນທີ່ຮັບຮູ້ໃນທົ່ວໂລກ ດ້ວຍຄຸນນະພາບ ດັ່ງກ່າວຈຶ່ງເປັນແຮງດຶງດູດຄວາມຕ້ອງການຜະລິດຕະພັນໄໝລາວໃນຕະຫຼາດພາກພື້ນອາຊີ ແລະ ຕະຫລາດໂລກ, ທັງເປັນການເພີ່ມໂອກາດ ທາງເສດຖະກິດໃຫ້ແກ່ຜູ້ຜະລິດເຄື່ອງຫັດຖະກຳໄໝພາຍໃນປະເທດ.



*ວິທີປະຕິບັດ ແລະ ນຳໃຊ້ອຸປະກອນແບບພື້ນບ້ານໃນການຜະລິດເສັ້ນໄໝລາວ*

ເພື່ອຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການດັ່ງກ່າວ ລັດຖະບານແຫ່ງ ສປປລາວ ຈຶ່ງແນໃສ່ເພີ່ມປະລິມານການຜະລິດເສັ້ນໄໝເປັນ 2 ເທົ່າດ້ວຍການສົ່ງເສີມການລົງທຶນໃສ່ການປູກມອນ-ລ້ຽງມ້ອນ, ໂດຍມອບໃຫ້ກະຊວງອຸດສາກະກຳ ແລະ ການຄ້າ, ກົມສົ່ງເສີມ ແລະ ພັດທະນາສິນຄ້າ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດ ແລະ ພັດທະນາໂຄງການສົ່ງເສີມການຜະລິດເສັ້ນໄໝແບບຍືນຍົງຢູ່ເຂດຊົນນະບົດ ສປປລາວ (SSPP), ບໍລິຫານໂດຍກົມແຜນການ ແລະ ການຮ່ວມມື/ໜ່ວຍງານຈັດຕັ້ງປະຕິບັດໂຄງການ, ກະຊວງອຸດສາຫະກຳ ແລະ ການຄ້າ ເຊິ່ງໂຄງການນີ້ໄດ້ຮັບທຶນຊ່ວຍເຫຼືອຈາກລັດຖະບານຍີ່ປຸ່ນ ຜ່ານກອງທຶນພັດທະນາສັງຄົມຂອງ ຍີ່ປຸ່ນ ແລະ ຖືກຈັດຕັ້ງປະຕິບັດຮ່ວມມືກັບພາກເອກະຊົນເພື່ອສ້າງການຮ່ວມມືການຜະລິດເສັ້ນໄໝທີ່ເຊື່ອມໂຍງເອົາຊຸມຊົນຜູ້ຜະລິດເສັ້ນໄໝໃນເຂດຊົນນະບົດເຂົ້າສູ່ຕະຫຼາດ.

ໃນການຈັດຕັ້ງປະຕິບັດໂຄງການສົ່ງເສີມການຜະລິດເສັ້ນໄໝແບບຍືນຍົງໃນເຂດຊົນນະບົດ ສປປ ລາວ ນີ້ **“ພວກເຮົາມຸ່ງໝັ້ນ ທີ່ຈະເພີ່ມ ປະລິມານການຜະລິດເສັ້ນໄໝລາວໃຫ້ເພີ່ມຂຶ້ນເປັນສອງເທົ່າ ແລະ ເພີ່ມປະລິມານການສົ່ງອອກເຄື່ອງຫັດຖະກຳໄໝລາວໃຫ້ໄດ້20%, ໂຄງການໄດ້ກຳນົດເປົ້າໝາຍໃສ່ຄອບຄົວ ທຸກຍາກໃນເຂດຊົນນະບົດ ແລະ ຊຸກຍູ້ຊ່ວຍເຫຼືອໃຫ້ເຂົາເຈົ້າເຂົ້າສູ່ຂະບວນການປູກມອນ-ລ້ຽງມ້ອນໃຫ້ເພີ່ມຂຶ້ນ 1,200 ຄອບຄົວກ່ອນປີ 2015 ທ່ານ ສົມຫວັງ ນິນທະວົງ, ຫົວໜ້າກົມສົ່ງເສີມ ແລະພັດທະນາສິນຄ້າ ແລະຫົວໜ້າໂຄງການ SSPP ກ່າວ”**

ງົບປະມານ ໃນການຈັດຕັ້ງປະຕິບັດໂຄງການມີ 1.8 ລ້ານໂດລາພາຍໃນໄລຍະເວລາ 4 ປີ, ໂຄງການແມ່ນໃຫ້ການຊ່ວຍສະໜັບສະໜູນໂດຍ ກົງແກ່ຊາວກະສິກອນ ແລະ ບໍລິສັດໄໝມ້ອນທີ່ເຂົ້າຮ່ວມໂຄງການຊຶ່ງລວມມີ:

- ຊ່ວຍສ້າງແຜນທຸລະກິດເພື່ອກຳນົດລາຍລະອຽດການຊ່ວຍເຫຼືອ ທີ່ຈຳເປັນໃຫ້ແກ່ບໍລິສັດເພື່ອສະໜັບສະໜູນ ການຮ່ວມມືການຜະລິດຢ່າງໂປ່ງໃສ ແລະ ຍຸດຕິທຳລະຫວ່າງບໍລິສັດກັບຊາວກະສິກອນ
- ຊ່ວຍສະໜອງ ວັດຖຸອຸປະກອນທີ່ຈຳເປັນເຊັ່ນ: ລວດໜາມລ້ອມຮົ້ວສວນມອນ ແລະ ວັດຖຸກໍ່ສ້າງເພື່ອປູກ ສ້າງເຮືອນລ້ຽງມ້ອນ
- ຊ່ວຍເຫຼືອທຶນຊື້ເບ້ຍມອນ ເພື່ອນຳໄປແຈກຢາຍໃຫ້ແກ່ຊາວບ້ານທີ່ເຂົ້າຮ່ວມໂຄງການ
- ຊ່ວຍເຫຼືອດ້ານງົບປະມານ ໃນການຈັດຝຶກອົບຮົມດ້ານເຕັກນິກວິຊາການເພື່ອຮັບປະກັນການຜະລິດເສັ້ນໄໝໃຫ້ມີຄຸນນະພາບ
- ຊ່ວຍເຫຼືອດ້ານງົບປະມານການການຈັດຝຶກອົບຮົມການສ້າງກຸ່ມຜູ້ຜະລິດ ເພື່ອຮັບປະກັນຄວາມຍືນຍົງໃນການຜະລິດເສັ້ນໄໝໃນເຂດຊົນນະບົດ

ບັນດາບໍລິສັດໄໝມ້ອນທີ່ເຂົ້າຮ່ວມໂຄງການຈະຖືກຄັດເລືອກໂດຍອີງໃສ່ມາດຕະຖານທີ່ໄດ້ກຳນົດໄວ້ ເຊັ່ນ: ຄວາມສາມາດດ້ານການເງິນ, ເຕັກນິກວິຊາການລວມທັງບຸກຄະລາກອນທີ່ຈະມາຈັດຕັ້ງປະຕິບັດວຽກງານ, ປະຫວັດການຊ່ວຍເຫຼືອສັງຄົມ, ເຄືອຂ່າຍການຕະຫຼາດທີ່ມີຢູ່ ແລະ ຄວາມມີຊື່ສຽງ ຫຼື ການພົວພັນຊື້ຂາຍທີ່ທ່ຽງທຳກັບຊາວກະສິກອນເປັນຕົ້ນ. ສົນໃຈເຂົ້າຮ່ວມໂຄງການ ຫຼື ສອບຖາມຂໍ້ມູນເພີ່ມເຕີມ ກະລູນາຕິດຕໍ່ໄດ້ທີ່ກົມສົ່ງເສີມ ແລະ ພັດທະນາສິນຄ້າ ໂທລະສັບ: 021 254523

ຄູ່ຮ່ວມງານຂອງໂຄງການປະກອບດ້ວຍກອງທຶນພັດທະນາສັງຄົມຂອງປະເທດຍີ່ປຸ່ນຜ່ານທະນາຄານໂລກ, ອົງການ ພັດທະນາປະເທດເນເທີແລນ ແລະ ສະມາຄົມຫັດຖະກຳລາວ ໂຄງການນີ້ເປັນສ່ວນໜຶ່ງຂອງການເຊື່ອມໂຍງເຂົ້າສາກົນດ້ານການຄ້າ(Integrated framework) ຊຶ່ງມີສູນກາງການປະສານງານຢູ່ກະຊວງອຸດສາຫະກຳ ແລະ ການຄ້າຢູ່ທີ່ໜ່ວຍງານຈັດຕັ້ງປະຕິບັດໂຄງການ (NIU), ກົມແຜນການ ແລະ ການຮ່ວມມື ແລະ ກົມສົ່ງເສີມ ແລະ ພັດທະນາສິນຄ້າ ເປັນຜູ້ຈັດຕັ້ງ ປະຕິບັດໂຄງການ ແລະ ຮ່ວມມືກັບທ້ອງຖິ່ນຄືພະແນກອຸດສາຫະກຳ ແລະ ການຄ້າແຂວງທີ່ກ່ຽວຂ້ອງ.

## ຕົວຊີ້ວັດການຕິດຕາມ ແລະ ປະເມີນຜົນວຽກງານພັດທະນາການຄ້າ ແລະ ພາກທຸລະກິດ (TPSDSG)

ໂດຍ: ໜ່ວຍງານຈັດຕັ້ງປະຕິບັດໂຄງການ, ພະແນກການຊ່ວຍເຫຼືອຂອງຕ່າງປະເທດ, ກົມແຜນການ ແລະ ການຮ່ວມມື

### ຜົນກະທົບຂອງໂຄງການ ແລະ ແຜນຕິດຕາມຜົນໄດ້ຮັບ

| **ເປົ້າໝາຍຂອງໂຄງການ** | | | | | | |
|---|---|---|---|---|---|---|
| ການຫຼຸດຜ່ອນຄວາມທຸກຍາກ ແລະ ການເຕີບໂຕທາງເສດຖະກິດ ໂດຍຜ່ານການເພີ່ມທະວີຄວາມສາມາດໃນການແຂ່ງຂັນ ແລະ ເຊື່ອມໂຍງກັບພາກພື້ນ. | | | | | | |
| **ຕົວຊີ້ບອກ ຜົນກະທົບຂອງໂຄງການ** | **ມາດຖານ** | **2009** | **2010** | **2011** | **2012** | **ແຫຼ່ງຂໍ້ມູນ** |
| 1. ອັດຕາສ່ວນ ການຄ້າ/GDP | 79% | 73% [1] | 77% | 66.3%* | - | WDI Database |
| 2. ຄວາມຄືບໜ້າຂອງການເຂົ້າເປັນສະມາຊິກອົງການການຄ້າໂລກ | ກຳລັງດຳເນີນງານ | ໄດ້ມີການສ້າງກົດໝາຍ ແລະ ນິຕິກຳໃໝ່ ພ້ອມທັງໄດ້ມີການລົງນາມສົນທິສັນຍາການຄ້າສອງຝ່າຍ | ສຳເລັດການ ເຊັນສັນຍາດ້ານການຄ້າ ແລະ ການບໍລິການສອງຝ່າຍກັບ ຍີ່ປຸ່ນ ແລະ ຈີນ | ສຳເລັດການເຊັນສັນຍາດ້ານການຄ້າ ແລະ ການບໍລິການ ສອງຝ່າຍກັບອິດສະຕາລີ ແລະ ໄທເປ (ຈີນ) ແລະ ສະຫະພາບເອີລົບກ່ຽວກັບສັນຍາການຄ້າດ້ານສິນຄ້າ | ສຳເລັດການເຊັນສັນຍາດ້ານການຄ້າ ແລະ ການບໍລິການສອງຝ່າຍກັບສະຫະລັດອາເມລິກາ | ບົດລາຍງານຈາກກົມນະໂຍບາຍການຕ່າງປະເທດ, ຈົດໝາຍຂ່າວຂອງ WTO |
| **ເປົ້າໝາຍການພັດທະນາຂອງໂຄງການ (Project Development Objective - PDO)** | | | | | | |
| ເພື່ອສະໜັບສະໜູນແກ່ ໂຄງຮ່າງການຈັດຕັ້ງວ່າດ້ວຍການຄຸ້ມຄອງລະດັບຊາດຂອງວຽກງານການເຊື່ອມໂຍງເຂົ້າສາກົນດ້ານການຄ້າ (NIFGS) ແລະ ຈັດຕັ້ງປະຕິບັດບັນດາກິດຈະກຳເບື້ອງຕົ້ນ ເພື່ອເປັນທິດທາງໃຫ້ແກ່ອົງກອນທີ່ສຳຄັນ ແລະ ບັນດາຂອດການດຳເນີນງານ ກໍ່ຄືບັນດາຄວາມແຕກໂຕນດ້ານຄວາມສາມາດ ເຊິ່ງເປັນຜົນກະທົບຕໍ່ກັບວຽກງານການຄ້າຂ້າມແດນ. | | | | | | |
| **ຕົວຊີ້ບອກຜົນກະທົບຂອງໂຄງການ** | **ມາດຖານ** | **2009** | **2010** | **2011** | **2012** | **ແຫຼ່ງຂໍ້ມູນ** |
| 1. ການຂະຫຍາຍຕົວດ້ານການສົ່ງອອກທີ່ບໍ່ແມ່ນວັດຖຸດິບ ທຳມະຊາດ | 31% | -12% | +60% | +2.5%* | +3%* | ຖານຂໍ້ມູນດ້ານການຄ້າຂອງ UN |
| 2. ການຂະຫຍາຍຕົວຂອງຂະແໜງການຄ້າດ້ານການບໍລິການ | 10.2% [2] | -1% | +29% | +2.5%* | +3%* | ຖານຂໍ້ມູນ WDI |
| 2. ກ). ຫຼຸດຜ່ອນເວລາໃນການຂົນ ສົ່ງຈາກບັນດາຈຸດທີ່ສຳຄັນໃນ ສປປ ລາວ ເຖິງບັນດາປະເທດຄູ່ຄ້າ | 50 days | 0% (50) | 0% (50) | -4% (48) | -8% (44) | ດັດສະນີການດຳເນີນທຸລະກິດ, ທະນາຄານໂລກ |
| 2.ຂ). ຫຼຸດຜ່ອນຄ່າໃຊ້ຈ່າຍໃນການຂົນ ສົ່ງຈາກບັນດາຈຸດທີ່ສຳຄັນໃນ ສປປ ລາວ ເຖິງບັນດາປະເທດຄູ່ຄ້າ | $1750/ container | 6% | 0% | 0% | 1% | |
| **ການສົ່ງອອກດ້ານການບໍລິການ** | | | | | | |
| ຂະຫຍາຍຕົວ | 44% | -1% | 29% | | | ຖານຂໍ້ມູນ WDI |

* ເປົ້າໝາຍ

1. ຂໍ້ມູນຈາກ East Asia and Pacific
2. ບໍ່ລວມການສົ່ງອອກແຮ່ທາດ, ໄຟຟ້າ, ໄມ້ ແລະ ຜະລິດຕະພັນຈາກໄມ້. ຂໍ້ມູນຈາກ: ຖານຂໍ້ມູນດ້ານການຄ້າ ຂອງ UN

WDI: ຕົວຊີ້ວັດການພັດທະນາໂລກ (Word Development Indicator)

**ຜົນກະທົບຂອງໂຄງການ ແລະ ແຜນຕິດຕາມຜົນໄດ້ຮັບ**

ເປົ້າໝາຍຂອງໂຄງການ ແລະ ແຜນຕິດຕາມຜົນໄດ້ຮັບແມ່ນ "ການຫຼຸດຜ່ອນຄວາມທຸກຍາກ ແລະ ເພື່ອການຂະຫຍາຍຕົວທາງເສດຖະກິດ ດ້ວຍການເພີ່ມຄວາມອາດສາມາດໃນການແຂ່ງຂັນ ແລະ ການເຊື່ອມໂຍງເຂົ້າພາກພື້ນ". ເຊິ່ງນີ້ໄດ້ສະແດງໃຫ້ເຫັນເຖິງບົດບາດຄວາມສຳຄັນຂອງການຂະຫຍາຍຕົວທາງເສດຖະກິດຕໍ່ກັບການຫຼຸດຜ່ອນອັດຕາຄວາມທຸກຍາກແລະເຫັນໄດ້ວ່າວຽກງານການຄ້າແມ່ນເຄື່ອງຈັກຂັບເຄື່ອນອັນສຳຄັນສຳລັບການຂະຫຍາຍຕົວເສດຖະກິດ.

1. **ອັດຕາສ່ວນການຄ້າ/GDP**: ໝາຍເຖິງອັດຕາສ່ວນທີ່ນຳໃຊ້ໃນການວິໄຈການເປີດກ້ວາງຂອງປະເທດຕໍ່ກັບການຄ້າສາກົນ. ເຊິ່ງແມ່ນອັດຕາສ່ວນຈາກການສັງລວມເອົາຜົນຂອງການສົ່ງອອກ ແລະ ນຳເຂົ້າທັງໝົດ (ສິນຄ້າ ແລະ ການບໍລິການ)ຕໍ່ກັບລວມຍອດຜະລິດຕະພັນພາຍໃນ(GDP). ເຊິ່ງເປົ້າໝາຍເພີ່ມການເຊື່ອມໂຍງດ້ານເສດຖະກິດ ກໍ່ໄດ້ກຳນົດໄວ້ໃນແຜນພັດທະນາເສດຖະກິດສັງຄົມຊຸດທີ VII ຂອງ ສປປ ລາວ ໂດຍກຳນົດອັດຕາສ່ວນ ການຄ້າ/GDP ແມ່ນ 100% ໃນປີ 2015.[1]
2. **ຄວາມຄືບໜ້າຂອງການເຂົ້າເປັນສະມາຊິກອົງການການຄ້າໂລກ**: ເປົ້າໝາຍຫຼັກຂອງການເຊື່ອມໂຍງເຂົ້າສາກົນດ້ານການຄ້າຂອງ ສປປ ລາວ ທີ່ກຳນົດໄວ້ໃນແຜນພັດທະນາເສດຖະກິດສັງຄົມ ຊຸດທີ VII ກໍ່ແມ່ນການເຂົ້າເປັນສະມາຊິກຂອງອົງການຯຄ້າໂລກ(WTO). ນີ້ຈະເປັນການຮັບປະກັນການເຂົ້າເຖິງຕະຫຼາດຫຼາຍກວ່າ 150 ປະເທດ ແກ່ ສປປ ລາວ ແລະ ທັງເປັນການສົ່ງສັນຍານດ້ານສະພາບແວດລ້ອມ ທາງທຸລະກິດຂອງລາວນຳອີກ. ເຊິ່ງຄວາມຄືບໜ້າຕ່າງໆໄດ້ສະແດງໃນບັນດາບົດສະຫຼຸບຂອງການເຈລະຈາສອງຝ່າຍກັບບັນດາປະເທດສະມາຊິກຂອງອົງການຯຄ້າໂລກ ກໍ່ຄືສະແດງໃນບົດລາຍງານກອງປະຊຸມໜ່ວຍປະຕິບັດງານການເຂົ້າເປັນສະມາຊິກອົງການຯຄ້າໂລກຂອງ ສປປ ລາວ.

**ເປົ້າໝາຍການພັດທະນາຂອງໂຄງການ (Project Development Objective - PDO)**

PDO ແມ່ນເປົ້າໝາຍສະເພາະສຳລັບຂົງເຂດໃດໜຶ່ງເພື່ອ "ສະໜັບສະໜູນການສ້າງໂຄງຮ່າງການຈັດຕັ້ງວ່າດ້ວຍການຄຸ້ມຄອງລະດັບຊາດຂອງວຽກງານການເຊື່ອມໂຍງເຂົ້າສາກົນດ້ານການຄ້າ(NIFGS) ແລະຈັດຕັ້ງປະຕິບັດບັນດາກິດຈະກຳຂອງ NIFGS ໃນເບື້ອງຕົ້ນ ເພື່ອແກ້ໄຂຂໍ້ຂ້ອງການປະຕິບັດງານ ກໍ່ຄືບັນດາຄວາມແຕກໂຕນດ້ານຄວາມອາດສາມາດ ທີ່ຍັງເປັນອຸປະສັກຕໍ່ກັບວຽກງານການຄ້າຜ່ານແດນ". NIFGS ໝາຍເຖິງບັນດາກະຊວງ ແລະ ພະແນກຕ່າງໆຂອງລັດ ທີ່ມີສ່ວນຮ່ວມໂດຍກົງ ເຂົ້າໃນການຈັດຕັ້ງປະຕິບັດບັນດາໂຄງການດ້ານການຄ້າ ເປັນຕົ້ນແມ່ນ ໂຄງການ EIF ບ່ວງທີ່ 1; ໂຄງການ TDF ທີ່ໄດ້ຮັບການສະໜັບສະໜູນຈາກ ອົດສະຕາລີ, ສະຫະພາບເອີລົບ, ເຢຍລະມັນ ແລະ ທະນາຄານໂລກ. ສະວິດເຊີແລນ ກໍ່ໄດ້ໃຫ້ການສະໜັບສະໜູນ ແກ່ໂຄງການ MOIC-UN Trade Cluster (ITC, ILO, UNCTAD ແລະ UNIDO), ເຢຍລະມັນ ໃຫ້ການສະໜັບສະໜູນແກ່ໂຄງການ ASEAN (GIZ) ແລະ ອາເມລິກາ ໃຫ້ການສະໜັບສະໜູນແກ່ໂຄງການ LUNA.

**ນີ້ແມ່ນບັນດາຜົນດັດສະນີ ທີ່ນຳໃຊ້ເຂົ້າໃນການວັດແທກຜົນກະທົບຂອງໂຄງການກໍ່ຄືນະໂຍບາຍຕ່າງໆ**:

1. **ການຂະຫຍາຍຕົວດ້ານການສົ່ງອອກທີ່ບໍ່ແມ່ນວັດຖຸດິບທຳມະຊາດ**: ເປົ້າໝາຍສຳຄັນຂອງກິດຈະກຳຕ່າງໆຂອງໂຄງການກໍ່ແມ່ນການສົ່ງເສີມຂະແໜງການສົ່ງອອກທີ່ບໍ່ນອນໃນຂະແໜງການທີ່ນຳໃຊ້ວັດຖຸດິບຈາກທຳມະຊາດ(ຕົວຢ່າງ: ບໍ່ແຮ່ ຫຼື ໄຟຟ້ານ້ຳຕົກ ຫຼື ໄມ້ ແລະ ຜະລິດຕະພັນຈາກໄມ້) ທີ່ສົ່ງຜົນຕໍ່ກັບຄວາມຍືນຍົງຂອງການຂະຫຍາຍຕົວທາງດ້ານເສດຖະກິດ. ແຜນພັດທະນາເສດຖະກິດສັງຄົມ ແນໃສ່ເພີ່ມອັດຕາການສົ່ງອອກໃນແຕ່ລະປີ ເຊິ່ງຂໍ້ມູນໄດ້ສະແດງໃຫ້ເຫັນການສົ່ງອອກຂະແໜງການນີ້ໄດ້ມີການເພີ່ມຂຶ້ນຢ່າງໄວວາໃນແຕ່ລະປີ.
2. **ການຂະຫຍາຍຕົວຂອງຂະແໜງການຄ້າດ້ານຂະແໜງການບໍລິການ**: ການຄ້າດ້ານການບໍລິການ ແມ່ນຂະແໜງການທີ່ສຳຄັນສຳລັບ ສປປ ລາວ ເພື່ອບັນລຸບັນດາເປົ້າໝາຍ, ໂດຍຜ່ານການສົ່ງເສີມບັນດາຂະແໜງການ ເປັນຕົ້ນແມ່ນການທ່ອງທ່ຽວ. ການເຂົ້າເຖິງການບໍລິການຢ່າງທົ່ວເຖິງ ແມ່ນສິ່ງທີ່ສຳຄັນ ໃນການສ້າງຄວາມອາດສາມາດໃນການແຂ່ງຂັນ ສຳລັບບັນດາຂະແໜງການພາກເອກະຊົນ. ຕາມຂໍ້ມູນຂອງທະນາຄານໂລກ ສະແດງໃຫ້ເຫັນວ່າຂະແໜງການດັ່ງກ່າວໄດ້ມີການເຕີບໂຕເຖິງ 7% ແລະ 2% ໃນສອງປີທີ່ຜ່ານມາ (2009 ແລະ 2010) ຕາມລຳດັບ.
   - 2.1 **ຫຼຸດຜ່ອນເວລາໃນການຂົນສົ່ງຈາກບັນດາຈຸດທີ່ສຳຄັນໃນສປປລາວ ເຖິງບັນດາປະເທດຄູ່ຄ້າ**: ໃນຖານະທີ່ສປປ ລາວ ເປັນປະເທດທີ່ມີເສັ້ນທາງໆບົກເຊື່ອມຕໍ່ກັບຫຼາຍປະເທດ, ການອຳນວຍຄວາມສະດວກທາງດ້ານການຄ້າຈຶ່ງມີຄວາມຈຳເປັນຫຼາຍ ແລະ ອີງໃສ່ທີ່ຕັ້ງພູມສັນຖານແລ້ວລາວຈຶ່ງມີຄວາມສະດວກຫຼາຍ. ບັນຫາອຸປະສັກທີ່ສຳຄັນຕໍ່ກັບການຂະຫຍາຍການສົ່ງອອກນັ້ນກໍ່ແມ່ນຄ່າໃຊ້ຈ່າຍ ແລະ ໄລຍະເວລາຂອງການຂົນສົ່ງໄປຍັງຕະຫຼາດສາກົນ. ຕາມຂໍ້ມູນດັດສະນີການສ້າງທຸລະກິດ (Doing Business Indicators) ສະແດງໃຫ້ເຫັນໄລຍະເວລາໃນການຂົນສົ່ງຈາກນະຄອນຫຼວງວຽງຈັນເຖິງບັນດາທ່າເຮືອຕ່າງໆແມ່ນມີການຫຼຸດລົງຢ່າງຕໍ່ເນື່ອງ.
   - 2.2 **ຫຼຸດຜ່ອນຄ່າໃຊ້ຈ່າຍໃນການຂົນສົ່ງຈາກບັນດາຈຸດທີ່ສຳຄັນໃນ ສປປ ລາວ ເຖິງບັນດາປະເທດຄູ່ຄ້າ**: ດັ່ງທີ່ກ່າວມາຂ້າງເທິງ, ການຫຼຸດຜ່ອນຄ່າໃຊ້ຈ່າຍໃນການສົ່ງອອກຈະເປັນການເພີ່ມຄວາມສາມາດໃນການແຂ່ງຂັນໃຫ້ກັບຜະລິດຕະພັນລາວໃນຕະຫຼາດສາກົນ. ເຊິ່ງປະຈຸບັນຂໍ້ມູນຍັງບໍ່ທັນສະແດງໃຫ້ເຫັນເຖິງການປ່ຽນແປງເທື່ອ.

**ການສົ່ງອອກດ້ານການບໍລິການ**

ການບໍລິການທີ່ໝາຍເຖິງຜົນທາງດ້ານເສດຖະກິດສິນຄ້າທີ່ຈັບບາຍບໍ່ໄດ້ເຊິ່ງອາດລວມທັງ:ການຜະລິດ,ການປ່ຽນຖ່າຍ ແລະ ການຊົມໃຊ້ໃນເວລາດຽວກັນ.ທຸລະກິດດ້ານການບໍລິການສາກົນໄດ້ຮັບການນິຍາມໄວ້ໃນປື້ມຄູ່ມືການດູນດ່ຽງການໃຊ້ຈ່າຍຂອງອົງການ IMF ໃນປີ 1993, ແຕ່ນິຍາມນັ້ນຍັງມີການນຳໃຊ້ໜ້ອຍຫຼາຍຢູ່ຕາມບົດລາຍງານເສດຖະກິດຕ່າງໆ.

1. ຂໍ້ມູນ: World Development Indicator Database managed by the World Bank
2. ຂໍ້ມູນ: WDI based on International Monetary Fund, Balance of Payments Statistics Yearbook and data files.

Ministry of Industry and Commerce - Department of Planning and Cooperation

# LAO TRADE MAGAZINE

Issue 7 - July 2012





# CONTENTS

**Lao Trade Magazine**

General Supervisor: Mrs. Khemmani PHOLSENA

Advisor: Mr. Sirisamphanh VORACHITH

Editor: Mr. Phouvieng PHONGSA

Contents by: Representatives from MOIC's Departments and Line Ministries

Published by: National Implementation Unit

**Dear reader,**

We would like to welcome you to the seventh edition of the

## Lao Trade Magazine.

July 2012.

Our seventh edition of trade magazine highlights the key activities and events of the projects under the trade development related works which includes the Principle of Transparency in World Trade Organization and Obligations of Lao PDR (WTO), the Implementation Progress of the Lao PDR Trade Facilitation Strategy 2011-2015, Roles and importance of trade enterprise management (SME) in international economic integration as well as the sustainable silk production project in Lao PDR and the Validation of Lao PDR DTIS Update 2012.

We hope the articles in our latest edition of the magazine will be interest to you. We look forward to your feedback and suggestion on articles you would like to be covered in future editions.

Thank you

**PAGE 4**
The Lao PDR DTIS Update 2012 Validated

**PAGE 6**
Principle of Transparency in World Trade Organization and Obligations of Lao PDR (WTO)

**PAGE 8**
The Implementation Progress of the Lao PDR Trade Facilitation Strategy 2011-2015

**PAGE 10**
Workshop on "International Trade and Competitiveness" Advance level

**PAGE 11**
Roles and importance of trade enterprise management (SME) in international economic integration

**PAGE 13**
